
ໂຮມເລື່ອງສັ້ນ
ຕາເວັນຂຶ້ນ
ທີ່ດອນນາງ

## ໂຮມເລື່ອງສັ້ນ




ພິມເທື່ອທີສອງ

ສຳນັກພິມຈຳໜ່າຍ ສ.ປ.ປ.ລ

1983

# ສາລະບານ


| ບົດທີ | ເລື່ອງ | ໜ້າ |
|---|---|---|
| 1.-- | ຕາເວັນຂຶ້ນທີ່ດອນນາງ<br>ໂດຍ ອຸທິນບຸນຍາວົງ | 1 |
| 2.-- | ຂໍຕາຍຢູ່ບ້ານເຮົາ<br>ໂດຍ ປຸ່ມ ຈຸນລະມຸນຕີ | 13 |
| 3.-- | ເພື່ອຊາດ ຕ້ອງພົບນ້ອງ<br>ໂດຍ ຄຳແພງເພັດດາວົງ | 23 |
| 4.-- | ວິລະກຳກອງຫລອນ<br>ໂດຍ ປຸ່ມ ຈຸນລະມຸນຕີ | 41 |
| 5.-- | ແກ້ວປີກຕົ້ນ<br>ໂດຍ ອຸທິນ ບຸນຍາວົງ | 55 |




ຂຸ້ຍຕື່ນຂຶ້ນມາທ່າມກາງຄວາມສຸກຊື່ນງຽບສະຫງົບຍາມເຊົ້າ ຂອບຟ້າດ້ານຕາເວັນອອກມີແສງພຸ່ມພູ່ມນວນຂອງອາລຸນ ທີ່ກຳລັງເບີກຟ້າ. ຝູງນົກກາພາກັນບິນເວີ້ນເຫີນເວຫາ, ບາງໂຕມຸ້ງຫນ້າໄປຍັງຖິ່ນດິນໄກ ເພື່ອຊອກຫາເຫຍື່ອ ເພື່ອດຳລົງຊີວິດຕາມປະສາຂອງສັດ ໃນມື້ໃຫມ່ທີ່ກຳລັງໄຂແຈ້ງ, ຫມູ່ແມງໄມ້ເລີ່ມເຄື່ອນໄຫວບິນໄປບິນມາ. ແມງພູ່ອ້າປີກຕ້ອນຮັບອາລຸນແລ້ວຕອມດອກໄມ້ດອກນັ້ນດອກນີ້, ແມງກະເບື້ອນານາຊະນິດ ປີກມີສີລວດລາຍ ບິນເປັນຫມູ່ ເບິ່ງແຕ່ໄກຄືດອກໄມ້ທີ່ເຄື່ອນໄຫວໄດ້, ແມງຄຸບ ແມງຊ້າງນຽ ແມງມາ ແລະ ອື່ນໆ ໄຕ່ຢູ່ຕາມໃບໄມ້ທີ່ຂຽວຊຸ່ມຫຸ່ມແລະເຕັມໄປດ້ວຍຢົດນ້ຳຄ້າງຈາກຝົນຕົກ ເມື່ອຄືນທີ່ຜ່ານມາ.

ລົມຍາມເຊົ້າພັດມາຄ່ອຍໆ ນຳເອົາກິ່ນຫອມຂອງດອກໄມ້ປ່າ

ກິ່ນຂອງຕົ້ນໄມ້ໃບຫຍ້າທີ່ປົ່ງໃໝ່ ໃຫ້ລຽລ່ອງໄປທົ່ວດົງດອນເປັນທີ່ຂອນຊອນແກ່ຜູ້ໄດ້ຊົມ ແລະດົມດ່ອມ.

ຂຽຫຼຽວເບິ່ງຂອບຟ້າຍາມເຊົ້າ, ຄຶດຢາກບິນໄດ້ດັ່ງນົກ, ພັດລຽໄດ້ດັ່ງລົມ, ຂຽຈະໄປທຸກແຫ່ງຫົນໃຫ້ສົມໃຈນຶກ.

ໂອ... ລົມເອີຽ ເຈົ້າຢູ່ທາງພັດດວີ ຢູ່ທາງພັດລຽລ່ອງໄປທຸກແຫ່ງໄປສຸດຟາກຟ້າ, ເຈົ້າບໍ່ລືສຸດຜຸດຜ່ອງ ຈົ່ງຊ່ວຽຊຳລະລ້າງຄວາມມືດໝອງ ຄວາມຊອກຊ້ຳໃນຊີວິດແຕ່ຄາວຫຼັງຂອງຂຽໃຫ້ໃສດັ່ງມະນີ ມີສັກສີດັ່ງສັດຕີລາວທົ່ວໆໄປໃນລະບອບໃໝ່ທອນ.

ເສັ້ນທາງແຫ່ງຊີວິດຂຽແຕ່ຄາວກ່ອນເຕັມໄປດ້ວຽຄວາມຂະຍອກຄອກຄອນ, ມີທຸກຫຼາຍກວ່າສຸກ ມີຮ້ອງໄຫ້ ຫຼາຍກວ່າສຽງຫົວ ຖືກຫຼອກລວງ ຖືກຢຽດຫຍາມປະນາມວ່າໄຮ້ກຽດ ໄຮ້ຄ່າ, ເປັນຜູ້ຍິງທີ່ຊົ່ວຊ້າໂລເລ. ແມ່ນລະຊີວິດຂຽແປດເປື້ອນ ມືດໝອງ ເປັນເຄື່ອງທົດລອງ, ເປັນເຄື່ອງຫຼິ້ນຂອງສັງຄົມສັກດີນາ ຂອງນາຍທຶນທີ່ຂູດຮີດ ຖືກເຂົາຊື້ຈ້າງເພື່ອຄວາມສຸກຊົ່ວຫວ່າງຊົ່ວຍາມແລ້ວເຂົາກໍປະປ່ຽຖິ້ມ ເປັນເສດຂອງສັງຄົມ ເສດຂອງມະນຸດທີ່ໄຮ້ສັກສີເປັນຜູ້ມີມົນທົນຕະຫຼອດຜອງໃດ ຖ້າບໍ່ໄດ້ຖືກສົ່ງມາອົບຮົມດັດສ້າງຢູ່ດອນນາງນີ້.

ຂ້ຽບໍ່ອາດລືມໄດ້ບົດຮຽນຊີວິດບົດທຳອິດ ເພາະມັນແສນຂົມຂື່ນ. ບາດກ້າວທຳອິດ ທີ່ຂຽຢຽບລົງເທິງເສັ້ນທາງ ອັນປະໂຫຽດດ້ວຽຄວາມຈຳເປັນນັ້ນ ຂຽກໍຕ້ອງຮ້ອງໄຫ້ດາວດິ້ນຈົນນ້ຳຕາຊິເປັນ

ເລືອດ, ມັ້ນເປັນບົດຮຽນສອນໃຫ້ຂ້ຽຮູ້ວ່າ ອັນສັງຄົມສັກດີນາແລະ ນາຍທຶນຈຳໜ່າຍທີ່ສົດໃສງົດງາມພາຍນອກນັ້ນ ມັນຮ້າຍຂາດແສນ ຫາຈຸນສຸດທີ່ຈະພັນລະນາໄດ້.

ຂຽນຶກເຫັນພາບແມ່ຜູ້ບັງເກີດເກົ້າທີ່ນອນເຈັບປ່ວຍມາຫຼາຍ ວັນ, ໜ້າເຫຼືອງລ່າ ຕາຊຶ່ງບໍ່ມີຊີວິດຊີວາ ເບິ່ງໄປຍັງຈຸດໜຶ່ງ ຢ່າງບໍ່ມີຄວາມໝາຍ. ແມ່ເວົ້າຄ່ຽງກັບຂຽວ່າ:

- " ລູກບໍ່ຕ້ອງໄປຢືມເງິນໃຫ້ເປັນໜີ້ເປັນສິນໃຜ, ເງິນ ເຮົາໝົດແລ້ວກໍບໍ່ຕ້ອງຊື້ລະຢາ. ປ່ຽໃຫ້ແມ່ໄປສູ່ຄວາມສະຫງົບ ທີ່ ແທ້ຈິງ, ແມ່ລຳບາກມາຫຼາຍແລ້ວ. ໃຫ້ລູກເບິ່ງແຍງນ້ອງຕ່າງແມ່ ຕໍ່ໄປ..."

ຂຽຈັບມືແມ່ມາແນບເອິກ ແລ້ວໄຫ້ສະອື້ນ ທັງເວົ້າສຽງກະ ຕຸກກະຕັກ ນ້ຳຕາໄຫຼນອງໜ້າ.

- " ລູກຈະບໍ່ຍອມໃຫ້ແມ່ຕ້ອງເປັນໄປດັ່ງນັ້ນ, ລູກຮັກແມ່ ເໜືອກວ່າຊີວິດ ແລະ ຈະເຮັດທຸກຢ່າງເພື່ອໃຫ້ແມ່ສວ່າງເຊົາ."

ອາການຂອງແມ່ເປັນໜັກຂຶ້ນ ຕ້ອງການເລືອດໃສ່ຕື່ມ ອີກ ສອງຖົງ ນັ້ນກໍໝາຍຄວາມວ່າຈະຕ້ອງຈ່າຍເງິນຊື້ເລືອດ, ນອກ ຈາກນັ້ນກໍຕ້ອງຊື້ຢາ ຊຶ່ງທ່ານໝໍຂຽນໃບສັ່ງໃຫ້ໄປຊື້ຕາມຮ້ານຂາຍ ຢາ ເພາະທາງໂຮງພະຍາບານບໍ່ມີຢາອັນທີ່ຕ້ອງການ. ຂຽຄິດໜັກ ວຸ້ນວາຍໃນໃຈປານຖືກໄຟລົນ ຫຼຽວຫາຄົນຜູ້ຄິດຕໍ່ບໍ່ມີ, ພໍ່ກໍບໍ່ເປັນພໍ່ ເປັນພຽງອັນທີ່ເອີ້ນວ່າຄົນຜູ້ໜຶ່ງທີ່ເຮັດໃຫ້ລູກເກີດມາໂດຍບໍ່ຕັ້ງໃຈ

ເທົ່ານັ້ນ ເພາະແມ່ເປັນເຄື່ອງທຶນ ເປັນເມັຽນຽຄົນທີສີ່ຂອງພໍ່ແລະ ຖືກປະຮາງ ເມື່ອເຈັດປີກ່ອນ. ຕໍ່ຈາກນັ້ນ ພໍ່ກໍເອົາເມັຽໃຫມ່ ໄປເລັ້ອຽງ ໂດຽອາໄສບາລະມີຂອງອ້າຽທີ່ເປັນນາຽພົນ ແລະ ຫນ້າທີ່ຕຳແຫນ່ງເຈົ້າເມືອງຂອງພໍ່ເອງ ເປັນເງື່ອນໄຂອຳນວຽໃຫ້ເຮັດສິ່ງໃດ ຫຼື ປາຖະຫນາສິ່ງໃດກໍໄດ້ຕາມຈຸດປະສົງ ໂດຽສະເພາະການຄ້າໄມ້ເຖື່ອນຢູ່ທາງພາກໃຕ້.

ຄອບຄົວຂອງຂ້ຽອັດສົນຈົນຕາແຈ ບໍ່ຫານແບ່ມີໄປຂໍເງິນນຳຜູ້ໃດໄດ້ ດັ່ງນັ້ນຂ້ຽຈຶ່ງຕັດສິນໃຈຂາຽຕົວ ເພື່ອເງິນກ້ອນຫນຶ່ງມາປິ່ນປົວຮັກສາພະຍາບານແມ່. ເລື່ອງການຫາເງິນແບບນີ້ ຂ້ຽປົກປິດທີ່ສຸດ, ແຕ່ກໍບໍ່ຕະຫຼອດ. ຂ້ຽຕ້ອງປະສົບກັບຄວາມອັບອາຽຂາຽຫນ້າແລະຂົມຂື່ນທີ່ສຸດໃນຊີວິດ. ການຂາຽຕົວຂອງຂ້ຽຖືກຕອບແທນດ້ວຽຂອງທີ່ໄຮ້ຄ່າທັງທີ່ຂ້ຽໄດ້ເສັຽສະລະສິ່ງທີ່ມີຄ່າທີ່ສຸດໃນຊີວິດສາວໄປແລ້ວ. ພໍ່ຄ້າຫນ້າເລືອດຜູ້ທີ່ຂ້ຽຍອມເປັນເມັຽຂອງມັນຊົ່ວຫວ່າງຊົ່ວຍາມນັ້ນເອົາເງິນໃຫ້ຫຼາຽສົມຄວນ ຄືເປັນເງິນໂດລາຈຳນວນ໔໐໐ ໄລ່ເປັນເງິນກີບໃນຕອນນັ້ນກໍປະມານ ໒໔໐.໐໐໐ ກີບ.ດ້ວຽເງິນຈຳນວນນີ້ຂ້ຽຟ້າວມຸ່ງຫນ້າໄປຍັງຮ້ານຂາຽຢາ ຈັດການຊື້ຢາຕາມທີ່ນາຽຫມໍສັ່ງ ແລ້ວຈ່າຽເປັນເງິນໂດລາ ເພາະບໍ່ມີເວລາ ໄປແລກເອົາເງິນກີບ. ຂ້ຽຈັບເອົາຫໍ່ຢາແລ້ວຍ່າງອອກຈາກຮ້ານ ແຕ່ບໍ່ທັນຫວິດກໍໄດ້ຍິນສຽງເຖົ້າແກ່ຮ້ອງບອກໃຫ້ຢຸດ ພ້ອມດຽວກັນ ກໍມີເດັກນ້ອຍຜູ້ຫນຶ່ງແລ່ນອອກຈາກຮ້ານໄປຢ່າງໄວວາ. ເຖົ້າແກ່ບອກຂ້ຽວ່າ

ເງິນໂດລາທີ່ຂ້ຽຈ່າຍຄ່າຢານັ້ນເປັນເງິນປອມ ! ຂ້ຽໂຕ້ຖຽງຈົນ ຫນ້າດຳຕ້າແດງ ແຕ່ບໍ່ທັນດົນກໍມີຕຳຫຼວດຄົນຫນຶ່ງມາຮອດ ພ້ອມກັບເດັກນ້ອຍຜູ້ທີ່ແລ່ນອອກຈາກຮ້ານຫວ້າງກັ້ນ. ຂ້ຽຖືກນຳໄປທີ່ປ້ອມຕຳຫຼວດ ຊຶ່ງຢູ່ສາມແຍກໃກ້ໆແລ້ວຖືກສອບສວນ, ກະເປົາຖືກຄົ້ນ ແລະ ເງິນໂດລາທຸກໃບຖືກສຳຫຼວດກວດກາ. ຕຳຫຼວດບອກຂ້ຽວ່າເປັນເງິນໂດລາປອມທັງຫມົດ ແລະ ຕັ້ງຂໍ້ຫາໃສ່ຂ້ຽວ່າເປັນຄົນຄ້າເງິນປອມ.

ຂ້ຽຮ້ອງໄຫ້ໂກກງດ້ວຍຄວາມຄຽດແຄ້ນ ແລະເຫຼືອອົກເຫຼືອໃຈ, ຢາກນຳໄປຂ້າບັກພໍ່ຄ້າຫນ້າເລືອດຄົນນັ້ນເປັນການລ້າງແຄ້ນໃຫ້ສາສົມໃຈ. ຂ້ຽສາລະພາບວ່າໄດ້ເງິນຈຳນວນນີ້ມາດ້ວຍ ການຂາຍຕົວ ເພື່ອຈະນຳໄປໃຊ້ຈ່າຍປິ່ນປົວແມ່ທີ່ເຈັບປ່ວຍຢູ່ໂຮງພະຍາບານ. ຕຳຫຼວດເອົາຂ້ຽໃສ່ລົດ ແລ້ວອອກຕິດຕາມເຈົ້າຂອງເງິນປອມຫນ້າເລືອດລາຍນັ້ນ ມື້ຫນຶ່ງເຕັມໆແຕ່ບໍ່ພໍ້.

ໂອ...ກັມເວນອື່ຫຼັງນໍ ຊຶ່ງເຮັດໃຫ້ຂ້ຽຕ້ອງປະສົບເຄາະຮ້າຍຫນັກຫນາໄປຊັກໃຊ້. ຫົວໃຈຂ້ຽຊອກຊ້ຳ ອອນເພັຽ,ຄິດຢາກຂ້າຕົວຕາຍໃຫ້ມັນແລ້ວໄປ.

ແມ່ທີ່ສູທຖກຂັງ ຢູ່ປ້ອມຕຳຫຼວດ ກໍມີນ້ອງມາບອກວ່າ ແມ່ໄດ້ເສັຽຊີວິດແລ້ວ, ແມ່ຊາບເລື່ອງການທີ່ຂ້ຽຖືກຈັບຈຶ່ງມີອາການ ຊຸດໂຊມ ແລະ ສິ້ນຊີວິດລົງໃນທີ່ສຸດ ປ່ຽໃຫ້ລູກຕັ້ງສີ່ຄົນເປັນກຳພ້າປະເຊີນໂລກຕາມລຳພັງຕໍ່ໄປ. ຂ້ຽເກືອບຂາດໃຈເມື່ອຊາບຂ່າວແມ່,

ເວົ້າຫຍັງບໍ່ອອກ ມັນຕັນໄປໝົດທຸກດ້ານ, ແລ້ວໃນທີ່ສຸດຂ້ຽກໍເອົາ
ສອງມືມູບໃສ່ໜ້າ ຮ້ອງໄຫ້ສະອື້ນຈົນຕົວສັ່ນເຊັ່ນ, ນ້ຳຕາໄຫຼ
ອາບແກ້ມບໍ່ມີເວລາເຫືອດແຫ້ງ, ເບິ່ງໂລກໜ່ວຽນີ້ບໍ່ເປັນຕາໜ້າ
ຢູ່, ມັນແລ້ງນ້ຳໃຈ ແລ້ງຄວາມຍຸຕິທຳ ແລ້ງຄວາມເມດຕາກາລຸນ
ທັງປວງ.

ຂ້ຽໄດ້ຮັບອະນຸຍາດໃຫ້ໄປເບິ່ງສົບແມ່ ຊຶ່ງຖືກນຳໄປໄວ້ທີ່
ວັດທາດຝຸ່ນ ກ່ອນຈະຈູດເຜົາປະມານໜຶ່ງຊົ່ວໂມງ. ແມ່ນອນສະ
ຫງົບຢູ່ໃນໂລງ ໃບໜ້າລາເຫຼືອງ ດວງຕາຫຼັບສະນິດ ເປັນການ
ຫຼັບຄັ້ງສຸດທ້າຽຂອງແມ່ ຕໍ່ແຕ່ນີ້ໄປແມ່ຈະບໍ່ມີວັນຕື່ນມືນຕາຂຶ້ນມາພົບ
ໜ້າລູກອີກ. ຂ້ຽຮູ້ສຶກຕ່ຳຄ້ຽໃນຈິດໃຈ, ຫວັ່ນໄຫວໄປທົ່ວທັງກາຽ
ແລະ ວິນຍານ, ຮູ້ສຶກເບົາຫວິວ ໂວ້ນເວ້ນ ແລ້ວຕໍ່ມາ ຂ້ຽກໍໜ້າ
ມືດໝົດສະຕິລົງ.

ເວລາຜ່ານໄປ, ຂ້ຽຮູ້ສຶກຕື່ນຂຶ້ນກໍພົບຕົວເອງຢູ່ໂຮງພະຍາ
ບານ. ຢູ່ຂ້າງຕຽງມີນ້ອງຊາຽຫຼາ ມີຕຳຫຼວດຜູ້ທີ່ທຳການສອບສວນ
ຂ້ຽແລ້ວກໍມີນາຽຕຳຫຼວດຊັ້ນຜູ້ບັນຊາການທີ່ຂ້ຽບໍ່ເຄີຽເຫັນມາກ່ອນ.
ເພິ່ນຜູ້ນີ້ບອກຂ້ຽວ່າບໍ່ໃຫ້ຢ້ານ, ໃຫ້ສະບາຽອົກສະບາຽໃຈ ຕໍ່ໄປ
ຈະບໍ່ຖືກກັກຂັງອີກເພາະເພິ່ນເອງເປັນຜູ້ປະກັນໃຫ້ປ່ຽຕົວຂ້ຽແລ້ວ.
ຂ້ຽຫຼັບຕາລົງ ຄິດສົງໄສບໍ່ເລີກບໍ່ແລ້ວໃນຕົວນາຽຕຳຫຼວດຜູ້ນີ້, ຮູ້
ສຶກບໍ່ເຊື່ອໝັ້ນໃນຕົວເອງ ມັນສັບສົນວຸ່ນວາຽເກີນກວ່າທີ່ຂ້ຽຈະຫຼຸດ
ຄຳເວົ້າອອກຈາກປາກໄດ້ເພື່ອຂອບໃຈເຂົາ.

ຂ້ອຍນອນຢູ່ໂຮງພະຍາບານໄດ້ສອງມື້ກໍອອກ, ໄປນັ່ງໂສກ ເສົ້າຫງ່ວມເຫງົາຢູ່ເຮືອນ ເປັນຄືນໝົດອາໄລໄຍດີຕໍ່ຊີວິດຄິດຮອດ ແມ່ຜູ້ທີ່ຈາກໄປໂດຍບໍ່ມີມື້ກັບມາຫາອີກ, ຄິດສົງສານນ້ອງທີ່ຍັງເປັນ ເດັກນ້ອຍ ແຕ່ຕ້ອງເປັນກຳພ້າແມ່ລວມທັງພໍ່ ໂດຍທີ່ພໍ່ຍັງບໍ່ທັນຕາຍ, ຫຼຽວໄປທາງປາຍຊານເຫັນ ເຄືອພູທີ່ແມ່ປູກ ເຫັນຕົ້ນໝາກ ທີ່ແມ່ ເຄີຍຄ້ຽວ, ຕົ້ນກ້ວຍ, ຕົ້ນອ້ອຍທີ່ແມ່ປູກຢູ່ຫຼັງບ້ານ ທັງໝົດຢູ່ໃນ ອາການສະຫງົບຄືກັບວ່າພາກັນໄວ້ອາໄລຫາດວງວິນຍານຂອງແມ່. ສິ່ງແວດລ້ອມເຫຼົ່ານີ້ເຮັດໃຫ້ຂ້ອຍທົນເບິ່ງຢູ່ອີກຕໍ່ໄປບໍ່ໄດ້. ຂ້ອຍຄິດຢາກ ໜີໄປໃຫ້ໄກໆ ໄປຢູ່ໂລກກວາງໄປຈົນສຸດແຜ່ນດິນເພື່ອໃຫ້ພົ້ນຈາກ ຄວາມຂົມຂື່ນທໍລະມານ ຄວາມອັບອາຍຂາຍໜ້າ ຄວາມອະຍຸຕິທຳ ທັງປວງ.

ອອກໂຮງໝໍບໍ່ເຖິງໜຶ່ງອາທິດ ຊີວິດຂ້ອຍກໍກ້າວໄປສູ່ອີກຂັ້ນ ໜຶ່ງ. ນາຍຕຳຫຼວດຜູ້ນັ້ນມາຢ້ຽມຢາມເຖິງບ້ານເຖິງເຮືອນ ແລະ ຊາບຊື່ເພິ່ນວ່າ ຊຸນພິທັກຕຳຫຼວດຕີ ທອງເລີນ ເປັນຜູ້ບັນຊາການ ຕຳຫຼວດເຂດໜຶ່ງ ໃນນະຄອນວຽງຈັນ. ເພິ່ນສະແດງຄວາມເຫັນ ອົກເຫັນໃຈທີ່ຄອບຄົວຂ້ອຍປະສົບເຄາະກັມ ແລະ ໄດ້ມອບເງິນ ຈຳ ນວນ ໑໐ ພັນກີບ. ເພິ່ນບອກວ່າເອົາໄວ້ໃຊ້ຈ່າຍຊື້ຢູ່ຊື້ກິນກັບນ້ອງ. ຂ້ອຍຮູ້ສຶກວ່າເພິ່ນເປັນຜູ້ ມີພະຄຸນຢ່າງລົ້ນເຫຼືອ ທີ່ມາຊ່ວຍເບິ່ງແຍງ ໃນຍາມຍາກເຊັ່ນນີ້. ກ່ອນຈາກໄປເພິ່ນບອກໃຫ້ຂ້ອຍໄປຫາ ທີ່ໂຮງ ການຕອນທ່ຽງໃນມື້ຕໍ່ມາ. ຂ້ອຍໄປຕາມນັດເພາະຢາກຊາບວ່າການ

ດຳເນີນຄະດີໄປຮອດຂັ້ນໃດແລ້ວ. ຂ້ຽເລົ່າເຫດການທຸກຢ່າງ ທີ່ເກີດຂຶ້ນ ກ່ຽວກັບເງິນໂດລາປອມ, ເບິ່ງຊົງເພິ່ນຄືເຂົ້າໃຈໃນຕົວຂ້ຽດີ, ວ່າຈະຊ່ວຍທຸກວິທີທາງ ເພື່ອບໍ່ໃຫ້ຂ້ຽຖືກສິ່ງຂຶ້ນສານຕັດສິນ ແລະ ວ່າໃຫ້ເຊື່ອໝັ້ນ.

ເລີກການຕອບຫຽງມ່ນັ້ນ ເພິ່ນພາຂ້ຽໄປກິນເຂົ້າທີ່ຮ້ານອາຫານແຫ່ງໜຶ່ງ. ເຮົາເວົ້າລົມກັນດົນເຖິງຊົ່ວໂມງກວ່າ ແລ້ວເພິ່ນກໍພານັ່ງລົດໄປຍັງເຮືອນຫຼັງໜຶ່ງທີ່ຢູ່ສອກຫຼີກ ຂ້ຽຕົກເປັນເມັຽເພິ່ນຢູ່ເຮືອນຫຼັງນີ້. ຄວາມສົງໄສໃນຕົວນາຍຕຳຫຼວດຜູ້ນັ້ນ ເປັນອັນວາໝົດໄປ ນັ້ນຄືຄວາມສົງໄສທີ່ວ່າ ເປັນຫຍັງເພິ່ນຈຶ່ງດີນຳຂ້ຽ ປະກັນໃຫ້ຂ້ຽອອກຈາກການກັກຂັງ ແລະ ບໍ່ຖືກສິ່ງຂຶ້ນສານ. ນັບແຕ່ນັ້ນມາ ຂ້ຽກໍສືບຕໍ່ໄປຍັງເຮືອນຫຼັງດັ່ງກ່າວສະເໝີ ໂດຍແມ່ນຊຸມພີທັກຫອງເລີ່ມພາໄປ ແລະ ເວັ້ນວ່າງພຽງມື້ໜຶ່ງ ຫຼື ສອງມື້ ບາງເທື່ອກໍນອນຄ້າງຄືນ. ຂ້ຽຕົກເປັນເມັຽນ້ອຍ ຫຼື ເວົ້າໃຫ້ຖືກແທ້ແມ່ນເປັນນາງບຳເລີຂອງເພິ່ນ ໂດຍໄດ້ຮັບສິ່ງຕອບແທນເປັນເງິນ ຊຶ່ງໄລແລ້ວເດືອນໜຶ່ງເປັນຈຳນວນຫຼາຍກວ່າເງິນເດືອນຂອງເພິ່ນອີກ ການພົວພັນລະຫວ່າງເພິ່ນກັບຂ້ຽແມ່ນປິດລັບທີ່ສຸດ. ແຕ່ຄວາມລັບບໍ່ມີໃນໂລກ, ເມັຽເພິ່ນຜູ້ອ້າງທ່າເປັນ ຊຸມພີທັກຕຳຫຼວດໂທ ລື່ນຜົວຊັ້ນໜຶ່ງມາຫາຂ້ຽຢູ່ເຮືອນ ພອມດວຍຕຳຫຼວດອົງຄະລັກ ຄືນໜຶ່ງແລ້ວກໍຊັ້ນໜາຂູ່ເຂັ້ນຂ້ຽຕ່າງໆນາໆ ເພິ່ນອອກຄຳສັ່ງໃຫ້ຂ້ຽເຊົາຕິດຕໍ່ພົວພັນກັບຜົວເພິ່ນເດັດຂາດ ຖ້າບໍ່ດັ່ງນັ້ນ ຕາຍ !

ເພິ່ນດ່າສຽດສີຕອນໜຶ່ງວ່າ ຂຽນເປັນແມ່ຈ້າງຊັ້ນສູງ ແຕ່ກ່ອນເຫັນໄປນຳເຖົ້າແກຊຸງ ເຈົ້າຂອງຮ້ານຂາຍສະແຕມແຕເບື້ອງຫຼັງ ແມ່ນຄ້າເງິນປອມ, ບໍ່ດົນກໍເຫັນມາຕິດນາຍຕຳຫຼວດ ພົວເພັນເອງ ເພື່ອຫວັງແກ່ເງິນ ຄຳດ່າດັ່ງກ່າວ ເຮັດໃຫ້ຂຽນຄຶດສະເດືອກ ແລະ ມາຮູ້ຄວາມຈິງວ່າ ເຖົ້າແກທີ່ຈ່າຍເງິນປອມແມ່ນຊື່ຊຸງ. ຫາກອີກນັ້ນຂຽນບໍ່ຮູ້ມາກ່ອນວ່າ ຜູ້ທີ່ຂຽນຂາຍຕົວໃຫ້ນັ້ນ ຊື່ສຽງຮຽງນາມວ່າຢ່າງໃດ ເພາະຜູ້ຕິດຕໍ່ປົກປິດເປັນຄວາມລັບທີ່ສຸດ ເພື່ອບໍ່ໃຫ້ມີເລື້ອງຫຍຸງພາຍຫຼັງ.

ການພົວພັນລະຫວ່າງທ່ານທອງເລີນກັບຂຽນ ຊຶ່ງດຳເນີນໄປເປັນເວລາສາມເດືອນ ເປັນອັນຕ້ອງຢຸດຕິລົງ. ຂຽນພະຍາຍາມຕິດຕາມສືບຫາບ່ອນຢູ່ຂອງເຖົ້າແກຊຸງຈົນພົບ ແຕ່ຄວາມຫວັງທີ່ຈະໃຫ້ມັນໄດ້ຮັບໂທດກຳນັ້ນ ແມ່ນບໍ່ມີທາງ ທັງນີ້ກໍເພາະເຖົ້າແກຊຸງ ຕັ້ງຮ້ານຢູ່ໃນເຂດຮັບຜິດຊອບຂອງທ່ານ ທອງເລີນເອງ. ເປັນທີ່ຊາບກັນວ່າ ຜູ້ບັນຊາການຕຳຫຼວດຂອງແຕ່ລະກອງເມືອງ ສະໄໝປະຕິການຄອງອຳນາດກັບພໍ່ຄ້ານັກທຸລະກິດນັ້ນປຽບຄືປາກັບນ້ຳ ເອົາອາໄສຊຶ່ງກັນ ແລະ ກັນ ໃຫ້ສິນບົນກັນ ແລະ ບໍ່ຈັບກັນຈັກເທື່ອ. ຕຳຫຼວດຈັບກໍ່ແຕ່ພວກຄ້າເລັກຄ້ານ້ອຍ ຊຶ່ງບໍ່ມີຊັບສິນຫຼວງຫຼາຍພໍທີ່ຈະໃຫ້ສິນບົນແກ່ເຈົ້າໜ້າທີ່. ຂຽນເລີກຄິດທີ່ຈະແກແຄນເຖົ້າແກຊຸງປ່ອຍໃຫ້ກຳສະໜອງກຳເອງ. ຂຽນຖະຫຼຳຕົວເປັນຄົນໂລເລ, ເອົາຮ່າງກາຍແລກກັບເງິນ, ຂຽນເປັນແມ່ຈ້າງນາງເລວໄປເສັຽແລວ ຍອມ

ສະພາບແວດລ້ອມບັງຄັບ, ຂ້ອຍເກືອກກົ້ວກັບລາຄີຄວາມບັດສີຕ່າງໆ ເປັນຍິງທີ່ໄຮ້ກຽດ ແລະ ສັກສີ ທັງທີ່ຂ້ອຍບໍ່ປາຖະໜາ ຢາກເປັນເຊັ່ນນີ້ມາກ່ອນເລີຍ.

ຜູ້ໃດສ້າງເວນສ້າງກຳຍ່ອມໄດ້ຮັບກຳຕອບສະໜອງ. ຂ້ອຍເຫັນເປັນຄືແນວນັ້ນແທ້. ຊຸນພິທັກທອງເລີນຖືກປະຊາຊົນລຸກຂຶ້ນປະທ້ວງຂັບໄລ່ ຖືກປະນາມດ່າວ່າຢ່າງເຈັບແສບເປັນນັກບຸນໃຈບາບ. ເຖົ້າແກ່ຊຸ້ງ ຖືກອຳນາດການປົກຄອງປະຕິວັດຈັບ ແລະຍຶດຮ້ານໃນຖານຄ້າເງິນແບບຕະຫຼາດມືດ ແລະ ມີເງິນປອມໄວ້ໃນຄອບຄອງ. ເຫດການດັ່ງກ່າວເກີດຂຶ້ນສອງສາມເດືອນກ່ອນທີ່ຈະມີການສ້າງຕັ້ງປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ. ສ່ວນຂ້ອຍເອງຖືກສົ່ງມາດັດສ້າງຢູ່ດອນນາງໄດ້ເດືອນໜຶ່ງກັບຊາວມື້ນີ້.

ດວງຕາເວັນຂຶ້ນພົ້ນຂອບຟ້າແລ້ວ, ສົ່ງສີແດງເຫຼື້ອມ ເປັນຍິບຍັບຕາມໜ້ານ້ຳ ແລະ ສ່ອງລອດໄປຕາມ ຫວ່າງງ່າໄມ້ ເປັນເລົາຄືດັ່ງໂຄມໄຟສາຍຫຼາຍຮ້ອຍຫຼາຍພັນອັນທີ່ສາດແສງໄປພ້ອມໆກັນ, ຂ້ອຍແຫງນເບິ່ງຕົ້ນຍາງທີ່ສູງລ້ວເໜືອກວ່າຕົ້ນໄມ້ອື່ນໃດໃນບໍລິເວນນີ້ແລ້ວ ກໍຄິດຮອດອ້າຍສົມສຸກ ຫົວໜ້າກອງຫຼອນຄຸ້ມຂ້ອຍຢູ່. ລາວຂຽນຈົດໝາຍມາຫາຫວ່າງ ອາທິດແລ້ວນີ້ ບອກໃຫ້ຂ້ອຍຕັ້ງໃຈ ຮ່ຳຮຽນ ແລະ ດັດສ້າງຕົວເອງໃຫ້ເປັນຄົນດີ ມີກຽດສັກສີສູງເດັ່ນ ຄືດັ່ງຕົ້ນຢູງຕົ້ນຍາງ.

ຈົດໝາຍຕອນໜຶ່ງກ່າວວ່າ : ອ້າຍຮູ້ດີວ່ານ້ອງເສັຍຄົນ

ຍ້ອນສິ່ງແວດລ້ອມ ຍ້ອນລະບອບປົກຄອງເກົ່າທີ່ເໜົ່າເໜັມ. ເນື້ອແທ້ແລ້ວນ້ອງເປັນຜູ້ມີຈິດໃຈສູງ ເສັຽສະຫຼະເປັນໜ້ານັບຖື. ນ້ອງເຄີຽໄດ້ຊ່ວຽກອງຫຼອນພວກ ອ້າຽ ຄາວທີ່ຈັບພວກລັກເອົາຂອງຂ້າມຟາກ, ເຄີຽຕົ້ມເຂົ້າປຽກມາລ້ຽງພວກອ້າຽໃນເວລາຢູ່ຍາມ ກາງຄືນ, ຫຼາຽຄືນຈົ່ມຄຶດຮອດຫານ້ອງ. ວຽງຈິດ ຂໍໃຫ້ນ້ອງເຊື່ອເທາະວ່າໃນໂລກນີ້ຍັງມີຜູ້ຊາຽທີ່ບໍ່ຖືຊາໃນເບື້ອງຫຼັງອັນບໍ່ງາມຂອງນ້ອງ, ຖ້າຄຶດວ່າຫາຜູ້ຊາຽທີ່ມີອຸດົມຄະຕິດັ່ງກ່າວຍາກປານງົມເຂັມ ໃນທະເລແລ້ວ ອ້າຽຂໍບອກກ່ອນວ່າຜູ້ຊາຽທີ່ວ່ານັ້ນ ກໍຄືອ້າຽຜູ້ໜຶ່ງ.

ລົມພັດປາຽຍາວດັງວູ້ງ ຄືດັ່ງຫອບເອົາຄວາມໃໝ່ ຄວາມປອດໃສມາໃຫ້ຜູ້ທີ່ອູບຮຶມດົດສາງທັງໝົດ, ຂຽຮູ້ສຶກອີ່ມເອີບໃນຫົວໃຈ ຊີວິດຕົ້ນໄປດ້ວຽຄວາມຫວັງ ຄວາມສົດຊື່ນ ຢ່າງບໍ່ເຄີຽພົບເຫັນມາກ່ອນ. ດອນນາງສອນໃຫ້ຂຽຮູ້ຈັກເປັນເຈົ້າຕົນເອງ ເປັນຄົນມີປະໂຫຽດຕໍ່ສັງຄົມ ຕໍ່ປະເທດຊາດບ້ານເມືອງ, ນອກນັ້ນ ມັນຍັງເຮັດໃຫ້ຂຽຮູ້ສຶກວ່າການປະຕິວັດມາຮອດຊ້າເກີນໄປ ຖ້າບໍ່ດັ່ງນັ້ນ ຂຽກໍຄົງບໍ່ໄດ້ເປັນຄົນໂລເລ ບໍ່ໄດ້ເສື່ອມເສັຽສັກສີດັ່ງທີ່ເປັນມາ. ຖ້າບໍ່ມີການປະຕິວັດກໍບໍ່ມີດອນນາງ ບໍ່ມີດອນນາງ ຊີວິດຂອງຂຽກໍມືດໜອງ ໄປເທົ່າພອງໃດ.



# ຂໍ່ຕາວຢູ່ ບ້ານເຮົາ

ໂດຍ: ປຸ່ນ ຈຸນລະມຸນຊີ

ການກັບຄືນມາຂອງນາງ ສີນແກ້ວ ໄດ້ເຮັດໃຫ້ຊາວບ້ານສີໄຄ ເມືອງສີໂຄດຕະບອງ ໄດ້ຮູ້ຄວາມຈິງຫຼາຍສິ່ງຫຼາຍຢ່າງຈາກຊີວິດອັນເປັນຈິງ ເຊິ່ງເຕັມໄປດວຍຄວາມທຸກຍາກປາກໝອງ ຂອງຄົນລາວທີ່ພາກັນຕົ້ນໂຕນໂຍນໜີໄປໄທ ແລວຖືກກັກຂັງຢູ່ບໍລິເວນສູນອົບພະຍົບແຂວງໜອງຄາຍ, ສະຖານທີ່ກັກຂັງບໍລິເວນຄົນລາວນັ້ນ ມັນບໍ່ແຕກຕ່າງຫຍັງກັບຄອກສັດລ້ຽງປະເພດໜຶ່ງ.

"ທຳອິດຂ້ອຍຄິດວ່າ ການຕົ້ນໂຕນໂຍນໜີໄປນັ້ນ ຈະເຮັດໃຫ້ຊີວິດຕົວເອງມີອິດສະລະ ແລະໄດ້ຮັບກັບຄວາມສຸກຢ່າງແທ້ຈິງ, ແຕ່ພໍໄປເຫັນແລວ...ຟ້າເອີຍ... ການປະຕິບັດຂອງເຈົ້າໜ້າທີ່ໄທ ແລະ ຄົນໄທໜອງຄາຍບາງຄົນໄດ້ເຮັດໃສ່ຄົນລາວ ເຕັມໄປດວຍຄວາມຢຽບຢ່ຳ ການຕ້ອນຮັບ ໃນຈິດສຳນຶກທີ່ວ່າ ລາວກັບໄທເປັນພີ່ນ້ອງກັນນັ້ນ ແມ່ນໃຫ້ຝັນເອົາດີກວ່າ" ສີນແກ້ວເວົ້າອອກມາຕາມຄວາມເປັນຈິງ.

"ຢູ່ໃສພວກໄທເອົາວ່າ ໃຫ້ການຕ້ອນຮັບ ແລະ ເບິ່ງແຍງ ຄົນລາວແມ່ນເຕັມໄປດ້ວຍຄວາມເປັນມະນຸດສະທຳ?" ຊາວບານ ຄົນໜຶ່ງຖາມດ້ວຍຄວາມສົນໃຈ.

"ແມ່ນແທ້... ຖ້າເປັນມະນຸດສະທຳຂອງຜີໂພງ ແຕ່ມັນບໍ່ແມ່ນມະນຸດສະທຳແຫ່ງຄວາມເປັນມະນຸດ, ພວກເຈົ້າໜ້າທີ່ ປະຕິການໄທ ມັນປາກຫວານແຕ່ໃຈຂອງມັນ ບໍ່ແຕກຕ່າງກັນຫຣືກັບສັດເດັຽລະສານປ່າເຖື່ອນ... ມັນສວຍໂອກາດສາງຄວາມສຸກຢູ່ເທິງກອງທຸກຂອງຄົນລາວ, ມັນຖືຖືກໝິ່ນປະໝາດ. ຢຽດຢາມຄົນລາວເຣົາ ຢ່າງບໍ່ມີບ່ອນໄວ້... "ນາງສົມແກ້ວ ເວົ້າດ້ວຍຄວາມຮູ້ສຶກຄຽດແຄ້ນ, ຄວາມໃນໃຈທີ່ໄດ້ເຫັນມາ ແລະໄດ້ພົບພໍ້ດ້ວຍຕົວເອງຢູ່ສູນອົບພະຍົບທີ່ໜອງຄາຍ, ໄດ້ຖືກລະບາຍອອກມາໃຫ້ຊາວບານໄດ້ຮູ້ຢ່າງຈະແຈ້ງ..ນາງໄດ້ເລົ່າໃຫ້ຊາວບານຮູ້ວ່າຢູ່ທີ່ໜອງຄາຍອັນເປັນບ່ອນເຕົ້າໂຮມຊາວອົບພະຍົບຈາກອິນໂດຈີນຫຼາຍກວ່າບ່ອນອື່ນໆນັ້ນ, ພວມຂະຫຍາຍໄພໂສເພນີ, ຢາເສບຕິດ, ເຮໂຣອິນ, ແລະເປັນນັກເລງ. ຜູ້ກຳອຳນາດແຂວງໜອງຄາຍໄດ້ບັງຄັບ ໃຫ້ພວກແມ່ຍິງຢູ່ໃນຄ່າຍອົບພະຍົບ, ຕ້ອງໄປເຮັດອາຊີບເປັນໂສເພນີເພື່ອຫາເງິນຕື່ມ, ຢາເສບຕິດເອົາເຂົ້າໄປແບ່ງປັນໃຫ້ຜູ້ແວງ ໃນຄ່າຍອົບພະຍົບ ແລະ ໄພແວງນຢາເສບຕິດກໍພວມຂະຫຍາຍຕົວແຮງໃນພວກຜູ້ຊາຍ ແລະ ແມ່ຍິງທີ່ບໍ່ມີວຽກເຮັດງານທຳ.

"ຂໍ້ສີ່ຕໍ່ແຫຼະກໍສຸດຢູ່ກັບ ເຈົ້າໜ້າທີ່ໄທປະຕິການພວກນີ້ເອງ

ຄວາມຊົ່ວຂອງພວກມັນເຮັດໃຫ້ຂ້ອຍປະຕິຍານກັບຕົວເອງວ່າ ຕັ້ງແຕ່ນີ້ໄປຂ້ອຍຈະບໍ່ຂໍໄປຢຽບຝັ່ງໄທອີກ ຈົນຮອດເທົ້າມື້ຕາຍ!".

ຕາມການບອກເລົ່າຂອງຍິງສາວດັ່ງກ່າວ ໄດ້ເຮັດໃຫ້ພໍ່ແມ່ອ້າຍເອື້ອຍນ້ອງທີ່ພາກັນມາຮ່ວມຟັງຢູ່ນັ້ນ ຕ່າງກໍ່ຫຼົງຮ້ອງດ່າ ເຈົ້າໜ້າທີ່ປະຕິການໄທ ໄປຕາມໆກັນ ໂດຍສະເພາະ ພວກໜຸ່ມສາວ ແລະ ຊາວບ້ານບາງຄົນທີ່ມີແນວຄິດຢາກໂຕນໜີໄປຝັ່ງໄທ ຕ່າງກໍເກີດມີຄວາມລັ່ງເລໃຈ ເມື່ອໄດ້ຮູ້ສະພາບການ ທີ່ເປັນການກະທຳອັນປ່າເຖື່ອນດັ່ງກ່າວ ພ້ອມດຽວກັນນັ້ນກໍມີສຽງໜຶ່ງຖາມຂຶ້ນວ່າ:

"ໃນເມື່ອຮູ້ວ່າ ເຈົ້າໜ້າທີ່ປະຕິການໄທ ປະຕິບັດແບບຊົ່ວຊ້າແນວນັ້ນແລ້ວເປັນຫຍັງລາວ ພວກເຮົາຈຶ່ງບໍ່ພາກັນລຸກຮືຂຶ້ນ ຕໍ່ສູ້ ແລະ ພາກັນກັບຄືນມາສູ່ແຜ່ນດິນຂອງເຮົາ?".

ພໍໄດ້ຍິນສຽງຖາມດັ່ງກ່າວ ນາງສົມແກ້ວ ກໍໄດ້ລະບາຍລົມຫາຍໃຈອອກມາດ້ວຍຄວາມອິດເມື່ອຍ ພ້ອມກັບຄິດຕອງ ເອົາເອງວ່າ ແນວຄິດທີ່ເປັນປະໂຫຍດຄຳຖາມດັ່ງກ່າວນີ້ຈະຕ້ອງຢູ່ໃນຄວາມສົນໃຈຂອງບັນດາພໍ່ແມ່ອ້າຍເອື້ອຍນ້ອງທົ່ວໄປ, ນາງນັ່ງຄິດ ເຖິງອະດີດທີ່ຜ່ານມາຊົ່ວໄລຍະໜຶ່ງແລ້ວຈຶ່ງຫຼຸດຄວາມເວົ້າອອກມາວ່າ:

"ຄວາມໜ້າໄຫວ້ຫຼັງຫຼອກຂອງເຈົ້າໜ້າທີ່ປະຕິການໄທມັນນຳອອກມາໃຊ້ຕໍ່ຄົນລາວຢ່າງສາລະພັດ, ຖ້າເບິ່ງກັນແຄບໆ ກໍຈະເຫັນວ່າ ພຶດຕິການຂອງພວກມັນນັ້ນແມ່ນມີເຈຕະນາດີຕໍ່ພວກເຮົາແທ້, ແຕ່ຖ້າຄິດເລິກ ເບິ່ງກວ້າງໄກອອກໄປແລ້ວ ກໍຈະເຫັນໄດ້ວ່າ ພວກມັນມີ

ແຜນການອັນຊົ່ວຮ້າຍຢູ່ເບື້ອງຫຼັງສາກ, ເພື່ອຍູ້ຄົນລາວອົບພະຍົບໄປສູ່ຄວາມເສັຍຕົວ ແລະກະທຳເນລະຄຸນຕໍ່ປະເທດຊາດບ້ານເກີດເມືອງນອນຂອງຕົນ!" ຍິງສາວເຊົາເວົ້າຊົ່ວຄາວ ເມື່ອເຫັນບັນດາອ້າຍເອື້ອຍນ້ອງພ້ອມ ສົນໃຈຕໍ່ຄວາມເວົ້າຂອງຕົນຢູ່ ຈຶ່ງເກີດມີມານະຈິດເລົ່າສະພາບການຄວາມເປັນຈິງຕໍ່ໄປອີກວ່າ:

"ທຸກມື້ໃດມາ, ພວກເຈົ້າໜ້າທີ່ປະຕິການໄທ ມັນໄປໂຄສະນາຊວນເຊື່ອຢ່າງຮອບດ້ານ ພວກມັນວ່າ ຢູ່ວຽງຈັນພີ່ປະຊາຊົນລາວຖືກທະຫານອ້າຍນ້ອງຫວຽດນາມຂົ່ມເຫັງຕັງຕັກ ຢ່າງໂຫດຮ້າຍ,ຟັງເບິ່ງຄວາມເວົ້າຂອງພວກມັນແລ້ວຄືກັບວ່າ ວຽງຈັນກາຍເປັນເມືອງນາຮົກໄປແລ້ວແນວນັ້ນ. ມັນເອົາຂ່າວຂີ້ຕົວະຕໍ່ແຫຼະໄປແຈງໃຫ້ຮູ້ເປັນປະຈຳ ພວກມັນເຮັດທຸກຢ່າງ ເພື່ອໃຫ້ຄົນລາວຢູ່ສູນອົບພະຍົບລືມບ້ານເກີດເມືອງນອນຂອງຕົນ" ຍິງສາວໄດ້ເລົ່າພຶດຕິການຂອງເຈົ້າໜ້າທີ່ປະຕິການໄທ ປະຕິບັດຕໍ່ຄົນລາວຢູ່ສູນອົບພະຍົບ ດ້ວຍສຽງເວົ້າອັນເຕັມໄປດ້ວຍ ຄວາມຄຽດແຄ້ນຢ່າງເຫຼືອໃຈຍອມວ່າ ໄດ້ມີຄົນລາວບາງຄົນຫຼົງເຊື່ອແລ້ວຕົກເປັນເຄື່ອງມື ຂອງພວກມັນ ແຕ່ສ່ວນຫຼາຍແລ້ວບັນດາພໍ່ແມ່ອ້າຍເອື້ອຍນ້ອງຍັງຄິດຮອດຄິດເຖິງເມືອງລາວຢູ່ສະເໝີ ແລະ ຫາໂອກາດໜີອອກຈາກ ສູນເພື່ອຊອກຫາທາງກັບຄືນສູ່ບ້ານເກີດເມືອງນອນຂອງຕົນ.

"ແຕ່ວ່າພວກມັນມີແຜນການອັນຊົ່ວຮ້າຍທີ່ສຸດ.." ຍິງສາວຫຼຸດຄວາມເວົ້າອອກມາດ້ວຍຄວາມອິດເມື່ອຍໃນຫົວໃຈ...ເມື່ອຄິດ

ເຖິງພຶດຕິການ ອັນຊົ່ວຮ້າຍຂອງເຈົ້າໜ້າທີ່ປະຕິການໄທ ໄດ້ມີຕໍ່ເພື່ອນຮ່ວມຊາດທີ່ພວມ ໄດ້ຮັບເຄາະກຳ ນາງໄດ້ເລົ່າພຶດຕິກຳອັນໜ້າເສົ້າສະຫຼົດໃຈຂອງຄົນລາວໃຫ້ຊາວບ້ານຟັງຕື່ມອີກວ່າ :

"ໃຫ້ພໍ່ແມ່ອ້າຍເອື້ອຍນ້ອງລອງຄິດດ້ວຍຫົວໃຈ ອັນເປັນທຳເບິ່ງດູວ່າ, ເພື່ອນຮ່ວມຊາດຂອງເຮົາ ທີ່ເຕັ້ນໂຕນໂຍນໜີໄປນັ້ນແມ່ນພາກັນຫຼົງຜິດຍອມແຜນການອັນມືດມົນ ຂອງພວກຈັກກະພັດອາເມລິກາ ແລະພວກອາດຍາສຶກສັກດີນາປະຕິການ ພໍໄປແລ້ວແທນທີ່ຈະໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ແຕ່ກໍໄດ້ຮັບກັບຄວາມຜິດຫວັງ, ພວກມັນໃຊ້ວິທີການຄວບຄຸມຢ່າງຂາດຄວາມເປັນມະນຸດສະທຳແລະຄອຍຈັບເອົາຄວາມຜິດ ຊອກຫາເລື່ອງ ໃສ່ຄົນລາວເຮົາ ຢ່າງໄຮ້ຄວາມເມດຕາກະລຸນາປານີ, ຄົນລາວເຮົາຕ້ອງມີຊີວິດຢູ່ດ້ວຍຄວາມທຸກທໍລະມານແລະທົນຢູ່ຢ່າງຈຳໃຈ ຍອມບໍ່ສາມາດຈະເອົາຕົວອອກຈາກຄ່າຍນາຣົກນັ້ນໄດ້"

"ອີ້ບູນລະເອີ້ຍ, ໂບຮານເພິ່ນຈັ່ງວ່າ ຟັງຄວາມໄທ ໄຟໄໝ້ບ້ານທະລາຍ" ພໍ່ຄົນໜຶ່ງນັ່ງຮ່ວມຟັງມາຕັ້ງແຕ່ຕົ້ນເວົ້າ ສົ່ງຂຶ້ນຢ່າງເຫຼືອອົດເຫຼືອທົນ ຈົນເຮັດໃຫ້ບັນດາອ້າຍເອື້ອຍນ້ອງ ຢູ່ໃນບໍລິເວນນັ້ນ ພາກັນຫົວດ້ວຍຄວາມພໍອົກພໍໃຈ.

"ສົມພໍເດເນາະ ຈົ່ງມີພີ່ນ້ອງລາວເຮົາ ພາກັນຫຼົບຕົວຄືນມາຢູ່ເລື້ອຍ. ພວກທີ່ບໍ່ຄິດເລິກເບິ່ງໄກນັກຈະເຕັ້ນໂຕນໂຍນໜີໄປໄດ້ງ່າຍໆ ຄວາມຈິງແລ້ວມັນກໍບໍ່ມີຫຍັງຍາກ ຖ້າຫາກທຸກຄົນບໍ່ເຫັນ

ແກ່ຕົວບໍ່ເອົາປຽບຂູດຣີດເພື່ອນມະນຸດນຳກັນເອງ ແລະຮູ້ຈັກຄຸນຄ່າ ການອອກແຮງງານ, ນາງສີນແກ້ວກັບຄືນມາເຖິງວຽງຈັນໄດ້ຫຼາຍ ອາທິດແລ້ວຄົງຈະເຫັນໄດ້ວ່າແມ່ນມີເຫດການຕາມຄວາມຊ່າລືຂອງ ພວກເຈົ້າຫນ້າທີ່ປະຕິການໄຫນັ້ນບໍ່ລະ?" ເພື່ອນຊາວບ້ານຄົນຫນຶ່ງ ໄດ້ອອກຄວາມຄິດເຫັນ.

"ບໍ່ເຫັນຫຮົງພໍທີ່ຈະຕື່ນຕົກໃຈ ທຸກຢ່າງໄດ້ປ່ຽນໄປໃນທາງ ດີ, ແລະບໍ່ເຫັນມີທະຫານທວຽດນາມ" ນາງສີນແກ້ວເວົ້າອອກມາ ຈາກຄວາມຮູ້ສຶກອັນແທ້ຈິງ ເຊິ່ງຄວາມຈິງນັ້ນກໍເປັນແນວນັ້ນແທ້ນັບ ຕັ້ງແຕ່ທີ່ນາງໄດ້ກັບຄືນມາສູ່ບ້ານເກີດເມືອງນອນຂອງຕົນ ສິ່ງທີ່ໄດ້ ຮັບເທື່ອທຳອິດກໍຄືຄວາມອົບອຸ່ນໃຈ ແລະ ເຫັນວ່າພົນແຜ່ນດິນລາວ ແມ່ນມີຄວາມອຸດົມສົມບູນຢ່າງພຽງພໍ ທີ່ຈະຍື່ນຄວາມສຸກໃຫ້ແກ່ຜູ້ບໍ່ຂີ້ ຄ້ານມັກວຽກ ຂະນະດຽວກັນສິ່ງທີ່ໄດ້ປາກົດຕໍ່ສາຍຕາຂອງນາງ ກໍ ແມ່ນ ການປ່ຽນແປງຂອງນະຄອນວຽງຈັນນັ້ນ ໄດ້ມີຄວາມເປັນລະ ບຽບຮຽບຮ້ອຍສິ່ງຄົນເກົ່າອັນເປື່ອຍເຍື່ອຍໄດ້ຖືກລົບລ້າງໄປຢ່າງສິ້ນ ເຊີງ ຜູ້ຄົນທັງຫຼາຍໄດ້ພ້ອມພາກັນສາມັກຄີອອກແຮງງານ ສ້າງພົນ ຜະລິດ ເພື່ອເປັນເຈົ້າຕົນເອງຢ່າງແທ້ຈິງ ສິ່ງປະທັບໃຈຂອງນາງ ອີກອັນຫນຶ່ງນັ້ນ ກໍຄືປະຊາຊົນຕາມຄຸ້ມຕ່າງໆ ນອກຈາກພາກັນຮຽນ ຮູ້ດ້ານການເມືອງແລ້ວ ກໍຍັງພາກັນຕໍ່ສູ້ຮຽນຮູ້ ເພື່ອປັດເປົ່າຄວາມ ກົກຫນັງສືໄດ້ເປັນຢ່າງດີ. ກ່ຽວກັບເລື່ອງນີ້ຍິງສາວໄດ້ຢືນຢັນຕໍ່ຊາວ ບ້ານອີກວ່າ :

"ການປ່ຽນແປງຂອງລາວນັ້ນແມ່ນເປັນການປ່ຽນແປງ ໄປໃນທາງດີແລະຖືກຕອງ,ຍອມເປັນຄວາມປາຖະໜາ ຂອງຄົນລາວສ່ວນໃຫຍ່ທີ່ເປັນກຳມະກອນ,ຊາວໄຮ່ຊາວນາແລະຜູ້ອອກແຮງງານບໍ່ມີການເອົາລັດເອົາປຽບກັນ,ແຕ່ກ່ອນຂຍບໍ່ໄດ້ຄິດແນວນັ້ນດອກ ຫຼັງຈາກໄດ້ໄປພົບພໍ້ຄວາມທຸກຍາກປາກໝອງ ຢູ່ສູນອົບພະຍົບໜອງ-ຄາຍແລ້ວ ຈຶ່ງຄິດຕື່ນຕົວເອງຄິດເຖິງພື້ນແຜ່ນດິນທີ່ໃຫ້ຄວາມອົບອຸ່ນມາຕັ້ງແຕ່ນ້ຍເທົ້າໃຫຍ່,ແລ້ວກໍໄດ້ຕັດສິນໃຈສ່ຽງຕາຍກັບຄືນມາ!"

"ຄົນຊັ້ນກໍໝາຍຄວາມວ່າ  ຄົນລາວມີຄວາມ ປາຖະໜາຢາກກັບຄືນມາບ້ານເກີດເມືອງນອນຂອງຕົນບໍ່ໄດ້ຫວາ?"ຊາຍໜຸ່ມຄົນໜຶ່ງຖາມອອກມາດ້ວຍຄວາມຂ້ອງໃຈ.

"ເປັນໄປໄດ້ຍາກ!" ຍິງສາວນັ້ນໜັກໃນ ຄວາມເວົ້າຂອງຕົນແລ້ວຈຶ່ງເວົ້າຕໍ່ອີກວ່າ : "ບັນດາ ອາຍເອື້ອຍນ້ອງ ຢູ່ສູນອົບພະຍົບນັ້ນ ຢາກຄືນມາພໍໃຈຈະຂາດ ແຕ່ກໍຖືກກີດກັ້ນ ຢ່າງຮອບດ້ານຈາກເຈົ້າໜ້າທີ່ປະຕິການໄທ, ພວກມັນສັ້ງຊອມເບິ່ງ ການເຄື່ອນໄຫວຂອງພວກເຮົາຢູ່ຕະຫຼອດເວລາ, ແຕ່ອີກດ້ານໜຶ່ງພວກມັນກໍຊອກຫາຜົນປະໂຫຍດ ສ້າງຄວາມຮັ່ງມີ. ຈາກຄວາມທຸກຍາກຂອງຄົນລາວ, ຜູ້ໃດຢາກກັບຄືນມາລາວ ຕອງຈ່າຍເງິນໃຫ້ມັນ ຜູ້ໜຶ່ງບໍ່ຕ່ຳກວ່າໜຶ່ງພັນບາດເປັນຢ່າງນ້ອຍ,ການກະທຳອັນໄຮ້ມະນຸດສະທຳຂອງເຈົ້າໜ້າທີ່ປະຕິການໄທນັ້ນ ຍ່ອມເປັນການຍາກ ທີ່ຈະລືມໄດ້ແລະບໍ່ສາມາດຈະໃຫ້ອະໄພຕໍ່ຄວາມຊົ່ວຮ້າຍຂອງພວກມັນ!"

"ນາງສີນແກ້ວ ໄດ້ເລົ່າຄວາມເປັນຈິງ ໃຫ້ໄທບ້ານເຮົາຮູ້ແນວນັ້ນກໍດີແລ້ວ ລູກຫຼານຜູ້ໃດຍັງຄິດຢາກໜີໄປເມືອງໄທ ກໍປ່ອຍໃຫ້ຫົວມັນໄປຊະ", ພໍ່ຖູພູດຄວາມເວົ້າອອກມາ ດ້ວຍຄວາມຮູ້ສຶກ ອົນເຫຼືອໃຈ ພໍເຫຼືອບເຫັນບັນດາໜຸ່ມສາວ ບາງຄົນພາກັນກົ້ມໜ້າຟັງກັນຢູ່ ພໍ່ຖູຈຶ່ງສວຍໂອກາດຖາມເໜັບແນມອອກມາວ່າ:

"ມີຂ່າວວ່າພວກຢູ່ສູນອົບພະຍົບ, ທາງການໄທ-ເຂົາຕິດຍຶດຕິດອຸ້ມໃຫ້ຂາລັດຖະການລາວ, ປະຊາຊົນເຂົາກໍລ້ຽງເກືອກິນອີ່ມ ບໍ່ຕ້ອງເຮັດວຽກຫຍັງສະນຸກນັ່ງກິນນອນກິນ. ພວກຢາແມ່ ຢານາງສະນຸກທາເລັບທາປາກ ອັນນັ້ນກໍມີແທ້ບໍ່?"

"ໃຜເວົ້າໃຫ້ພໍ່ຖູຟັງແນວນັ້ນ?" ຍິງສາວຖາມຄືນພ້ອມປ່ອຍສຽງຫົວຂວັນອອກມາ.

"ໄດ້ຍິນຄົນໄທບ້ານເຮົາມັນຈ່າລືກັນແນວນັ້ນ" ພໍ່ຖູຕອບດ້ວຍສຽງເວົ້າເປັນປົກກະຕິ ແຕ່ກໍປ່ອຍສຽງຫົວຢ່າງເຍີ້ຍຢັນອອກມາໃນຕອນທ້າຍ.

"ແຕ່ຕາມລູກຫຼານໄປຮູ້ເຫັນມາແລ້ວ ມັນບໍ່ໄດ້ເປັນໄປແນວນັ້ນ ສ່ວນພວກຫົວໂຈກປະຕິການນັ້ນ ອາດເວົ້າບໍ່ຊ່າງ, ຍອມເຂົາມີຄວາມຮັ່ງມີສີສຸກຢູ່ພໍແຮງແລ້ວ ບໍ່ເຫັນປ່ອນໜ້າມາເບິ່ງພວກອົບພະຍົບ, ແຕ່ມີຢູ່ຄືກັນພວກມັນສົ່ງລູກແຫຼງຕີນມືມາຊວນຊາວໜຸ່ມໄປເປັນເປົ້າບັງກະສຸນຕາງແທນພວກມັນ, ເມື່ອເວົ້າລວມແລ້ວ ພວກຢູ່ສູນອົບພະຍົບນັ້ນຕົກຢູ່ໃນສະພາບຕາຍທັງເປັນ ມີການຈຳກັດການ

ຢູ່ກືນ ແຮງງານຖືກຂູດຮີດ ເຮັດວຽກຫນັກ ແຕ່ໄດ້ຮັບຄ່າແຮງງານ ຫນ້ອຍ. ແນວໃດກໍ່ຕາມ ສິບສຸກຢູ່ບ້ານເພິ່ນບໍ່ເທົ່າທຸກຢູ່ໃນບ້ານໂຕດອກ ສຳຫຼັບຂ້ອຍແລ້ວແມ່ນຈະຂໍຈື່ຈືນເທົ່າຮອດມື້ຕາຍ!... ເຂັດແລ້ວສຳ ຫຼັບເມືອງໄທ ຈະຂໍຕາຍຕາຫຼັບຢູ່ບ້ານເຮົາດີກວ່າ".

-" ພືນແຜ່ນດິນໄທແລະປະຊາຊົນໄທແມ່ນດີທັ້ງນັ້ນ ແຕ່ມັນ ບໍ່ເປັນຕາໄສ້ແຕກນຳພວກປະຕິການໄທ ເອົາປະເທດໄທ ຂາຍປະ ຊາຊົນໄທໃຫ້ຕົກເປັນຂ້ອຍຂ້າ ຂອງຈັກກະພັດອາເມລິກາຢ່າງໂງຫົວ ບໍ່ຂຶ້ນ..." ເພື່ອນບ້ານອີກຄົນຫນຶ່ງໄດ້ອອກຄວາມຄິດເຫັນຂອງຕົນ.

- ການໂອ້ລົມຢ້ຽມຢາມຖາມຂ່າວການກັບຄືນມາຂອງນາງ ສີນແກ້ວ ໄດ້ເຮັດໃຫ້ຊາວບ້ານສີໄຄ ໄດ້ເຂົ້າໃຈແຈ້ງ ຕໍ່ແຜນການ ອັນຊົ່ວຮ້າຍຂອງຈັກກະພັດອາເມລິກາ ແລະລູກແຫຼ້ງຕົນມີປະຕິການ ເປັນຢ່າງດີ ອັນເປັນສ່ວນຫນຶ່ງ ໄດ້ເຮັດໃຫ້ຊາວບ້ານມີສະຕິລະວັງ ຕົວຫຼາຍຍິ່ງຂຶ້ນ. ສຽງຕົບມືຢ່າງນອງນັ້ນໄດ້ດັງຟົດຂຶ້ນພ້ອມກັນເມື່ອ ສຸດສຽງເວົ້າຊາຍຫນຸ່ມທີ່ມີຫົວກ້າວຫນ້າຜູ້ຫນຶ່ງໄດ້ເວົ້າຂຶ້ນວ່າ:

"ພວກເຮົາຕ້ອງເດັດດ່ຽວທັບມ້າງທຸກກົນອຸບາຍຂອງສັດຕູ! ພັກປະຊາຊົນປະຕິວັດລາວຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງ ການປະຕິວັດລາວຫມັ້ນຍືນ ".



# ເພື່ອຊາດ ຕ້ອງພົບພ້ອງ

ຄືນວັນທີ ໑໘ ຕຸລາ ເປັນຄືນສະຫຼອງໄຊຄັ້ງສຳຄັນໃນທາງປະຫວັດສາດຂອງຊາດລາວ ໑໙໗໔ ທີ່ເດີ່ນທາດຫຼວງນະຄອນວຽງຈັນ ຝູງຊົນເປັນແສນໄປຊົມການສະແດງສິນລະປະວັນນະຄະດີແລະການສະແດງທຸກຢ່າງ ທີ່ເຕັມໄປດ້ວຍຄວາມຟົດຟື້ນ ມ່ວນຊື່ນມະໂຫລານຊຶ່ງບໍ່ເຄີຍມີໃນປະຫວັດສາດ ຂອງຊາດລາວ: ທຸກຄົນພົບຊີວິດໃຫມ່ອັນສົດໃສ ໃບໜ້າໃຫມ່ຂອງຊາວນະຄອນຫຼວງວຽງຈັນກໍຄືປະຊາຊົນໃນທົ່ວປະເທດ ປ່ຽນຈາກຄວາມຢານກົວກັບມາຍິ້ມແຍ້ມແຈ່ມໃສແຕ່ມື້ນັ້ນເປັນຕົ້ນມາ. ເພາະວ່າປະຊາຊົນທຸກຄົນເຊື່ອໝັ້ນການນຳພາຂອງພັກປະຊາຊົນປະຕິວັດລາວກຳໄດ້ທຸກໄຊຊະນະຮອບດ້ານ ອຳນາດທຸກຢ່າງຕົກຢູ່ໃນກຳມືຂອງປະຊາຊົນ.

- ຕໍ່ໄປນີ້ແມ່ນສຽງຮ້ອງ ຂອງນາງສາວດາວອນ ໃນເພງຮ້ອງຊື່ວ່າ ຈຳປາເມືອງລາວ. ແລະ ນົກສັນຕິພາບ.

ສຽງຕົບມືດັງສະໜັ່ນຫວັ່ນໄຫວເມື່ອນັກຮ້ອງຍ່າງອອກມາສູ່

ເວທີແສງຕາເປັນແສນໜ່ວຍຫຼຽວຈ້ອງເບິ່ງນາງທີ່ກຳລັງຮ້ອງເພງ ດ້ວຍສຽງອັນອ່ອນຊ້ອຍ ນົ້ມນວນທ່າທາງ ໄດ້ສະແດງຢ່າງແຈ່ມແຈ້ງ ບອກເຖິງຄວາມອົງອາດກ້າຫານສົມເປັນວິລະສັດຕີຂອງລາວ.

- ທອງພັນ ໂຕຄືມາຫງຶກຫງາກເອົາແທ້....! ເບິ່ງຜູ້ສາວຮ້ອງເພງຈົບອ້າປາກຕາກເຕືອກ.

- ອ່ຽເນາະ ຟັງແດ່ແມ້! ຢ່າແຊວຫຼາຍ.

- ຕິດໃຈບໍ່ລະທອງພັນ?

- ບຸນມີ ແມ່ນໂຕມາຟັງເພງຫຼືມາຟຽ. ເຫັນໃຈຜູ້ເພິ່ນຕັ້ງໃຈຟັງແດ່ແມ...!

- ເອີ ເອົາຊິເຊົາຟຽເຊົາເວົ້າ.

ສຽງເພງຈົບລົງດ້ວຍຄວາມພໍອົກພໍໃຈຂອງທຸກຄົນ. ໃນຂະນະນັ້ນ ສຽງດັງຕູມຕາມຄືສຽງປືນດັງລຽນຕິດກັນ ໕ ນັດ ບຶດໜຶ່ງກໍແຕກອອກເປັນແສງໄຟ ຮູບດອກໄມ້ຫຼາຍສີຢູ່ເທິງອາກາດທ້ອງຟ້າເດີນທາດຫຼວງ ສຽງໄຊໂຍໂຮຮ້ອງຂອງຝູງຊົນ ດັງຝົດສະໜັ່ນຂຶ້ນພ້ອມກັນສ້າງບັນຍາກາດຕື່ນເຕັ້ນໃຫ້ທຸກໆຄົນ.

- ບຸນມີ ໂຕເຄີຍເຫັນຈັກເທື່ອບໍ?

- ເຮົາເຄີຍເຫັນແຕ່ຄູບາ ເພິ່ນເຮັດຢູ່ວັດເອົາຟັງດິນ ຈູດຍາມບຸນອອກພັນສາ.

- ເຮົາກໍຄືກັນ.

- ທອງພັນ ຢ່າເມືອແຫງນໜ້າ ຂຶ້ນຟ້າຫຼາຍແນ້ ຫຼຽວໜ້າ

ຫຼຽວຫຼັງແດຫັ້ນມານັ່ງຢູ່ໃກ້ໂຕຫັ້ນມາ.

- ໃສ ຫຼຽວເບິ່ງຫຍັງ? ບຸນມີ.

ທອງພັນຖາມບຸນມີພ້ອມກັບຫຼຽວໄປເບິ່ງ ຕັ່ງຂ້າງຂອງເຂົາ ຫົວໃຈຕົກວາບ...ບາດໜຶ່ງ.

- ຖາມແມ້ ທອງພັນຫາກໂຕກ້າ.

- ວູ...ວ...ຢ່າປາກບອນຫຼາຍໂຕກະດາຍ.

ຊາຍໜຸ່ມພະຍາຍາມຄິດຫາ ຄຳຖາມສອງສາມຢ່າງ. ທັງຫຼຽວເບິ່ງໜ້ານາງເພື່ອຈະຫາໂອກາດອັນເໝາະສົມແຕ່ກໍ່ບໍ່ໄດ້ໂອກາດຈັກເທື່ອ ທັນໃດນັ້ນໝູ່ຂອງນາງກໍຍ່າງລົງມານັ່ງທີ່ຕັ່ງຂ້າງອີກ ໔ ຄົນແສງຕາທຸກຄົນຫຼຽວເບິ່ງທ້ອງຟ້າ.

- ໂອ້ຍ...! ຟ້າເອີຍ.

ຈ້ອງພູພໍດີຕົກລົງຕັກຂອງນາງເຮັດໃຫ້ຕົກໃຈພໍດີໃຫ້ໂອກາດແກ່ທອງພັນເອົາຟ້າວຫຼຽວໄປເບິ່ງຕັກນາງ...ແສງຕາທັງຄູ່ໄດ້ປະສານກັນເຂົ້າພໍດີ.

- ຕື່ນບໍ່?

- ຕື່ນແທ້ອາຍ.

- ດົນປານໃດຊິໄດ້ຂຶ້ນໄປຮ້ອງເພງຕໍ່?

- ເພິ່ນຈູດພູແລ້ວ ພວກນ້ອງກໍຂຶ້ນໄປສືບຕໍ່.

- ມາວຽງຈັນດົນປານໃດແລ້ວ?

- ໑໕ ມື້ແລ້ວອາຍ.

ແສງໄຟສະທ້ອນອອກມາທາງໜ້າເວທີປະກອບກັບບ່ອນນັ່ງຂອງຊາຍໜຸ່ມໃກ້ກັບເວທີ ສາມາດຫຼຽວເບິ່ງໜ້ານາງນັກຮ້ອງສິນລະປະກອນໝົດທັງສາມຄົນ. ແສງຕາຂອງເຂົາມາຢຸດຢູ່ ໃບໜ້າອັນຂາວນວນທຳມະຊາດຂອງດາວອນນັກຮ້ອງສິນລະປະກອນເວລານັ້ນຄວາມຮູ້ສຶກ ຂອງຫົວໃຈເກີດມີຂຶ້ນ ແກ່ຈິດໃຈຊາຍໜຸ່ມ. ນາງໜ້າຮັກໜາຖະໜອມ. ທ່າທາງອົງອາດແສງຕາທຸກໜວຽ ເຕັມໄປດ້ວຍຄວາມບໍລິສຸດ. ວາຈາວາດເວົ້າ ບໍ່ມີເງື່ອນງຳດົນງນາງກໍງວາກໜ້າມາຍິ້ມໃສ່. ຈະເປັນການຍິ້ມໃສ່ດ້ວຍໄມຕີຈິດມິດຕະພາບຫຼືຍິ້ມໃສ່ດ້ວຍຄວາມຮັກນັ້ນ ທຸກຢ່າງບໍ່ກ່ຽວ. ຂໍໃຫ້ຍິ້ມໃສ່ເທົ່ານັ້ນກໍເປັນການພໍໃຈ.

- ນ້ອງ...ຮ້ອງເພງມ່ວນຫຼາຍ.
- ແມ່ນແທ້ບໍ່...! ບໍ່ທໍ່ນັກຮ້ອງຢູ່ວຽງຈັນດອກ.
- ທີ່ຈິງແລ້ວ ຢູ່ວຽງຈັນກໍຮ້ອງເພງມ່ວນດີກັນ ແຕ່ເນື້ອໃນຂອງເພງບາງເພງ ມັນໄປທາງສະແດງ. ບໍ່ບອກເຖິງຄວາມເປັນຊາດຂອງຕົນເອງມັກເຊີດຊູສັງຄົມຕາເວັນຕົກ. ບາດເນື້ອເພງພວກນ້ອງຮ້ອງເຮັດໃຫ້ທຸກຄົນຕື່ນເຕັ້ນຄິດເຖິງຄວາມຮັກຊາດ. ປະກອບກັບຜູ້ຮ້ອງກໍງາມໆ...
- ບໍ່ງາມທໍ່ສາວວຽງຈັນດີອ້າຍ.

ສອງກີບດອກບົວຊຶ່ງແດງທຳມະຊາດຢູ່ແລ້ວເມື່ອໄດ້ຍິນຊາຍໜຸ່ມເວົ້າເຖິງຄວາມງາມກໍຍິ່ງແດງເຂົ້າໄປອີກ.

- ສາວວຽງຈັນ ກໍງາມໄປຈັ່ງໜຶ່ງແຕ້ມແຕ່ງເອົາ. ບາດ ສາວຊຳເໜືອຊຽງຂວາງໜັ້ນຕີ ຊ້ຳພັດງາມລື່ນສາວວຽງຈັນຕັ້ງ ມີ ເທົ່າ. ແມ່ນຄວາມອ້າຽບໍ່ລະ?

ບັດນີ້ຣຽຍິ້ມຂອງນາງ. ໄດ້ໃຊ້ແທນຄຳຕອບ ແສງຕາສ່ວນໜຶ່ງຫຼຽວໄປເບິ່ງໄຟພູເທິງອາກາດ. ອີກສ່ວນໜຶ່ງຫຼຽວແວບມາທີ່ເຂົາແບບສິອາຽງວາດໃດວາດໜຶ່ງ.

- ຂໍໂທດ ລືມກັນມາຕັ້ງດົນແລ້ວ...ອ້າຽບໍ່ຮູ້ຊື່ນ້ອງ.

- ນ້ອງຊື່ດາວອນ ຢູ່ກອງສິນລະປະກອນກອງທັບປົດປ່ຽປະຊາຊົນລາວ.

- ຊື່ມ່ວນ ຄົນກໍງາມ.

ສຽງດົນຕີຈາກຣ້ານຕ່າງໆດັງກ້ອງກັງວານທົ່ວບໍລິເວນເດີ່ນຫາດຫຼວງບໍ່ເປັນອຸປະສັກອັນໃດໃຫ້ແກ່ເຂົາ ໃນການໂອ້ລົມກ່ອນອື່ນໝົດໃນເວລານັ້ນ ມັນຊ່າງເປັນສຸກໃຈເຫຼືອເກີນໃນຊີວິດຂອງເຂົາທີ່ເກີດຂຶ້ນມາ.

- ນ້ອງກໍຢາກຮູ້ຊື່ອ້າຽຄືກັນ.

- ທອງພັນຈັ່ງໃດລະ.

ດາວອນຍິ້ມຣັບຄຳຕອບດ້ວຽທ່າທາງເປັນກັນເອງ ຄືກັນກັບລຶງເຄີຽກັນໄດ້ຫຼາຽເດືອນໃນຕາຂອງນາງເຕັມໄປດ້ວຽໄມຕີຈິດມິດຕະພາບອັນດູດດື່ມ.

- ຢູ່ທາງວຽງໄຊຄືຊິມ່ວນເນາະ?

- ມ່ວນແທ້ອ້າຍ ແຕ່ວ່າ ຕອນປີ ໑໙໕໔ ມ່ວນຢູ່ ແຕ່ບໍ່ຊື່ນ
ປານໃດເພາະພວກໂຈນອາກາດມັນໂຫດຫ້ຽມທີ່ສຸດ.

- ໂອ່...ຕອນນັ້ນພວກນ້ອງຢູ່ໃສ?

- ກໍຢູ່ວຽງໄຊນັ້ນແຫ.

- ລອງເລົ່າໃຫ້ອ້າຍຟັງຈັກໜ່ອຍພໍຊິໄດ້ບໍ່ເນາະ?

- ໄດ້ແທ້ອ້າຍແຕ່ຍານເວລາບໍ່ພໍ.

- ທີ່ໃດກໍໄດ້ບໍ່ເປັນຫຍັງ ດາວອນ.

- ຄືວ່າເລີ່ມແຕ່ປີ ໑໙໖໖ ມານີ້ແຫຼະຈັກກະພັດອາເມລິກາ ມັນໄດ້ກໍ່ສົງຄາມ ອັນໂຫດຮ້າຍປ່າເຖື່ອນ ຢູ່ໃນປະເທດ ຂອງເຮົາ (ລາວ) ກໍຄືຢູ່ໃນປະເທດຫວຽດນາມອ້າຍນ້ອງ ເພື່ອໝາຍຈະດັບສູນກໍາລັງຮັກຊາດ ຂອງລາວໃຫ້ໝົດກ້ຽງ ຕາມທິດສະດີຂອງ ນິກເຊິນ. ເຂົາໄດ້ລະດົມກໍາລັງທາງອາກາດມີທັງເຮືອບິນຮົບເຕ ໒໘ ແອນເລີ ໑໙ ອາຍພົມບີ ໕໒ ແອບ ໑໐໕ ແລະ ຍົນອື່ນໆອີກແລ້ວແຕ່ເຫມາະສົມກັບພວກມັນ. ການກະທໍາເພື່ອຫວັງດັບສູນກໍາລັງຮັກຊາດ ແລະ ປະຊາຊົນຢູ່ໃນເຂດປົດປ່ອຍຢ່າງທາລຸນໂຫດຮ້າຍທີ່ສຸດ, ໃນສະໜາມຮົບທົ່ວໂລກ ນ້ອງເຫັນວ່າແມ່ນເມືອງລາວຂອງເຮົານີ້ແຫຼະຖືກເຄາະກໍາຫຼາຍທີ່ສຸດ. ມັນຖິ້ມລູກລະເບີດນາໆຊະນິດໃສ່ດິນລາວຈົນເຖິງ ໓ ລ້ານໂຕນ ຈຸບໃນດິນສົນໃນນໍ້າ ໄດ້ຖືກທໍາລາຍ-ເປັນບາງສ່ວນ.

ແຕ່ການກະທໍາຂອງພວກໂຈນອາກາດ ແລະ ທະຫານປະຕິ

ບັດການທາງໜ້າດິນ ຂອງພວກມັນຈະບໍ່ປະສົບຜົນສຳເລັດ ຕາມທີ່ພວກມັນຄາດໝາຽເອົາໄວ້ນັ້ນ. ຄວາມຄິດອັນນີ້ຖືກປະຊາຊົນລາວທີ່ຮັກຊາດ ຮັກຄວາມເປັນທຳ ມີຫົວຄິດກ້າວໜ້າ ຢາກໃຫ້ປະເທດຂອງເຮົາໄດ້ຮັບເອກະລາດອັນສົມບູນ. ປະຊາຊົນຢູ່ໃນເຂດປົດປ່ຽຕັດສິນໃຈຢືນຕໍ່ສູ້ດ້ວຽຄວາມອົງອາດກ້າຫານ. ທັງຊາຽ ແລະຍິງ. ເຮັດໃຫ້ບັ້ນຮົບທຸກບັ້ນທີ່ມັນສ້າງຂຶ້ນ ໄດ້ຮັບຄວາມປະລາໄຊທັງໜ້າດິນ ແລະ ທາງອາກາດ ໃນທີ່ສຸດໄຊຊະນະບັ້ນສຸດທາຽ ກຳລັງຮັກຊາດລາວ ແລະປະຊາຊົນກໍໄດ້ ຮັບໄຊຊະນະຢ່າງສົມບູນໂດຽການຊີ້ນຳຂອງພັກປະຊາຊົນປະຕິວັດລາວ.

ດາວອຸນ ນາງເລົ່າດ້ວຽ ໃບໜ້າເຄັ່ງຂຶມ ຄຽດແຄ້ນຢ່າງເຫັນໄດ້ໃນຕໍ່ໜ້າຂອງຊາຽໜຸ່ມ ພາບຄວາມຈຳເປັນຂອງທອງພັນໄດ້ເລື່ອນລຽເຂົ້າມາສູ່ສະໝອງຂອງເຂົາທັນທີ. ທຸກມື້ໃດທັງກາງເວັນ ແລະ ກາງຄືນ ທ້ອງຟ້າ ນະຄອນຫຼວງວຽງຈັນ ສະໄໝນັ້ນສຽງຍົນ ເຕ ໒໘, ແອບເລີ ໑໙, ແອບ ໑໐໕, ບີ ໕໒ ດັງສົບສົນປົນກັນປານທ້ອງຟ້າຊິແຕກ ຄວາມຄຽດແຄ້ນ ໄດ້ຜຸດຜ່ານເຂົ້າສູ່ສະໝອງຂອງເຂົາທັນທີທັງເສັຽໃຈຕໍ່ຕົນເອງທີ່ເກີດມາເປັນຄົນກິນເຂົ້າສຸກປາຕາຽລາງ. ບໍ່ມີໂອກາດໄດ້ສ້າງ ຄຸນງາມຄວາມດີຕໍ່ປະເທດຊາດບ້ານເມືອງ. ທອງພັນກັດແຂ້ວໄວ້ແໜ້ນ ແສງຕາເຫຼືອດໄປມາຮອບບໍລິເວນເດີ່ນທາດຫຼວງ.

- ອ້າຽເສັຽໃຈ ດາວອຸນ.

- ເສັຽໃຈຫຣັງນໍ້?

- ເພາະວ່າ... ອ້າຽເກີດມາເປັນຄົນລາວຢູ່ພື້ນແຜ່ນດິນລາວກິນເຂົ້າສຸກປາຕາຽລ້າງບໍ່ມີໂອກາດໄດ້ສ້າງຄຸນງາມຄວາມດີ. ຕໍ່ປະເທດຊາດບ້ານເມືອງນຳເພິ່ນ.

- ຢ່າຄິດແນວນັ້ນຕິ ອ້າຽທອງພັນ ການປະຕິວັດບໍ່ແມ່ນຈະຢຸດເຊົາພຽງເທົ່ານີ້ອ້າຽຕ້ອງມີໂອກາດ ເຮັດການປະຕິວັດຢ່າງແນ່ນອນ.

- ອ້າຽຄິດວ່າຄືຊິຫມົດພຽງເທົ່ານີ້ເພາະຄວາມສະຫງົບສຸກຢ່າງໄດ້ມີຂຶ້ນທົ່ວປະເທດແລ້ວເດ.

- ຍັງມີຫຼາຽບັນຫາໄດ້ອ້າຽ, ທີ່ທາງຂັ້ນເທິງເພິ່ນ ຈະແກ້ໄຂໃຫ້ເຫມາະສົມ. ຂໍໃຫ້ອ້າຽຕັ້ງຫນ້າເຮັດວຽກນຳເພິ່ນທຸກຢ່າງ.

ນາງລຸກຂຶ້ນຈາກຕັ່ງພ້ອມດ້ວຽຫມູ່ສອງຄົນ. ເມື່ອໄດ້ຍິນໂຄສົກປະກາດສືບຕໍ່ ການສະແດງສິນລະປະກອນ. ແສງຕາອັນບໍລິສຸດແຫຼມຄົມໄດ້ປະສານກັນກັບແສງຕາທອງພັນຢ່າງດູດດື່ມທີ່ສຸດ.

- ນ້ອງລາລະ ໂອກາດຫນ້າພໍ້ກັນໃຫມ່.

- ເຈົ້າ ໂຊກດີ...

ວັນເວລາຜ່ານໄປ ໔ ມື້. ເຮັດໃຫ້ຫົວໃຈ ຂອງຊາຽຫນຸ່ມຄິດເຖິງບັນຫາທີ່ພົບກັບດາວອນ. ສາວສິນລະປະກອນ ທີ່ມີສຽງຮ້ອງອັນນຸ້ມນວນຫູ. ໃຈຫນຶ່ງຄິດຄຽດແຄ້ນຕໍ່ການກະທຳຂອງໂຈນອາກາດຕາມທີ່ນາງເລົ່າໃຫ້ຟັງ. ສຽງເພງດັງອອກຈາກ ໂທລະໂຄງ ໃກ້

ເຮືອນຂອງເຂົາ ເຮັດໃຫ້ເຂົາເຫັນພາບ ດາວອນ ກຳລັງຢືນຮ້ອງເພງຢູ່ເທິງເວທີ...

- ທອງພັນເອີຍ ລູກຄືມານັ່ງຊຶງແຫ້ ໄປຫາເຮັດລ້າ ເຮັດການນຳບ້ານນຳເມືອງເພີ້ນທະແໝ້...!

ຊາຍໜຸ່ມຕື່ນຍຸບໝຶກແຮງ. ຫຼຽວຄືນຫຼັງເຫັນແມ່ກຳລັງນັ່ງເອົາມີດສະນາກຕັດສີສຽດແສງຕາຫຼຽວເບິ່ງເຂົາ...

- ຄືນຊັ້ນ ພໍ່ເພິ່ນໄປຂໍເບີກ ເງິນເດືອນນຳເຖົ້າແກ່ ໂຮງງານແປ້ງນົວບໍ່ໄດ້ບໍ...?

- ບໍ່ໄດ້ດອກລູກເອີຍ ບັດນີ້ພໍ່ຂອງເຈົ້າ ກໍຈະບໍ່ມີວຽກເຮັດອີກຕໍ່ໄປແລ້ວ.

- ເປັນຫຍັງພໍ່ຈຶ່ງບໍ່ໄດ້ເຮັດວຽກເຂົາໄລ່ພໍ່ອອກຈາກການບໍ?

- ບໍ່ແມ່ນດອກລູກ. ພໍ່ຂອງເຈົ້າ ໄປຮັບເງິນ ນຳເຖົ້າແກ່ເມື່ອໄປຮອດໂຮງງານ. ກໍມີແຕ່ພະນັກງານ ໂຈເຈກັນຢູ່. ເຄື່ອງຂອງໃນໂຮງງານບໍ່ມີເຫຼືອຈັກອັນຈັກແນວ.

- ເປັນຫຍັງຈຶ່ງວ່າແນວນັ້ນ. ເຖົ້າແກ່ເຂົາເປັນຫຍັງ?

- ມັນກໍໂຕນ ໄປໄທພຸ້ນແລ້ວເດ ທອງພັນ...ພໍ່ຂອງເຈົ້າແລະ ຄົນງານຕັ້ງເປັນ ໑໐໐ ຄົນບໍ່ມີໃຜໄດ້ຮັບເງິນເດືອນ...

- ໂທ່...ແມ່ພວກນາຍທຶນບ້າບໍ່ອັນນີ້ມັນບໍ່ດີຫຍັງຈັກຢ່າງ. ມັນບໍ່ສົງສານກຳມະກອນພະນັກງານ. ມັນຊຸດຣີດແຮງງານແລ້ວບໍ່ພໍມັນຍັງບໍ່ໃຫ້ເງິນເດືອນອີກ.

- ເຂົາຫຼຽວເບິ່ງແມ່ໃບໜ້າຂອງເພິ່ນຫງ່ວມເຫງົາຜິດປົກກະຕິ. ແນ່ນອນແມ່ຕ້ອງມີຄວາມ ກະທົບກະເທືອນຫຼາຍບັນຫາໂດຍສະເພາະ ດ້ານຄອບຄົວ. ຊາຍໜຸ່ມເນັ່ນສືບເຂົ້າກັນ ພາຍໃນສະໝອງຄຶດເຖິງວັນທີ່ ໒໓ ສິງຫາ ໑໒ ຕຸລາ. ທັງສອງມື້ນັ້ນເຂົາໄດ້ໄປຮ່ວມໂຄ່ນລົ້ມອຳນາດການປົກຄອງເກົ່າທີ່ເນົ່າເໝັນ. ແລະສະຫຼອງໄຊຊະນະຄັ້ງປະຫວັດສາດຂອງຊາດ. ໄດ້ຍິນເພິ່ນປາໄສວ່າ. ຈະແກ້ໄຂ ຊີວິດການເປັນຢູ່. ຈະແກ້ໄຂທຸກບັນຫາ ທີ່ປະຊາຊົນໄດ້ຮັບຄວາມທຸກທໍລະມານ. ຈາກອຳນາດການປົກຄອງເກົ່າ ກະທຳຕໍ່ປະຊາຊົນ. ພ້ອມກັນນັ້ນ ໄດ້ຮຽກຮ້ອງໃຫ້ ປະຊາຊົນຮ່ວມມືກັບອຳນາດການປົກຄອງທຸກຂັ້ນ ເພື່ອຕໍ່ສູ້ທັບມ້າງກົນອຸບາຍ ອັນເລິກແລບຂອງປະຕິການທີ່ໂຕນໜີໄປຢູ່ໄທກັບຈັກກະພັດອາເມລິກາ ທີ່ຍັງປະສົງຈະມ້າງເພສັນຕິພາບຂອງລາວເຮົາ.

- ລູກຄຶດແນວໃດທອງພັນ?

- ແມ່...! ເຮົາຄຶດໄດ້ແລ້ວ ຕອນບ່າຍນີ້ເຮົາຈະໄປຫາປະທານຄຸ້ມ ເພື່ອຊີ້ແຈງຊີວິດການເປັນຢູ່ ໃນຄອບຄົວຂອງເຮົາໃຫ້ເພິ່ນຊ່ວຍເຫຼືອ.

- ມັນຊິເປັນໄປໄດ້ບໍ່ລູກເອີຍ?

- ຕ້ອງໄດ້ແມ່...! ເພາະອຳນາດການປົກຄອງໃໝ່ ທີ່ຕັ້ງມານີ້ ແມ່ນຊ່ວຍເຫຼືອປະຊາຊົນແທ້. ເພິ່ນບໍ່ແມ່ນນາຍຄືແຕ່ເກົ່າແລ້ວໄດ໋. ເພິ່ນເປັນຜູ້ນຳພາ...

- ຄັນຊັ້ນໃຫ້ລູກໄປຂໍໃຫ້ເພິ່ນຊ່ວຍແກ້ໄຂເບິ່ງ!.

ເດືອນໜຶ່ງຜ່ານໄປດ້ວຍຄວາມລຳບາກ ຕໍ່ຊີວິດການເປັນຢູ່ພາຍໃນຄອບຄົວ ແຕ່ກໍ່ຖືກ ແກ້ໄຂໄດ້ຍ້ອນ ອຳນາດການປົກຄອງ, ບ້ານຮ່ອງຄ້າທີ່ເຂົາອາໄສເຊົ່າເຮືອນຢູ່ໃນຄຸມນັ້ນກັບພໍ່ແມ່ແລະນ້ອງອີກສອງຄົນ. ບັດນີ້ພໍ່ຂອງເຂົາກໍ່ໄດ້ເຮັດວຽກຢູ່ໂຮງງານ. ຜະລິດເຄື່ອງກະເສດ. ແມ່ເຮັດວຽກຢູ່ ສະຫະກອນຮວມໝູ່. ສ່ວນນ້ອງອີກເຮັດວຽກຢູ່ໂຮງງານຕ່ຳແຜ່ນແພ. ທອງພັນມີຄວາມດີໃຈຕໍ່ຊີວິດການເປັນຢູ່. ພາຍໃນຄອບຄົວຊຶ່ງຖືກແກ້ໄຂ ດ້ວຍອຳນາດການປົກຄອງລະບອບໃໝ່. ບໍ່ແມ່ນແຕ່ຄອບຄົວຂອງເຂົາເທົ່ານັ້ນ ຄອບຄົວອື່ນໆທີ່ຍາກຈົນກໍ່ມີວຽກເຮັດງານທຳ, ໄດ້ຮັບຄ່າຕອບແທນຢ່າງສົມເຫື່ອສົມແຮງ. ສຳລັບເຂົາເອງຍັງຫວ່າງງານຍ້ອນການຕັດສິນໃຈຍັງບໍ່ໄດ້ຕົກແນ່ວ່າ ຈະຕ້ອງເຮັດແນວໃດ. ຄວາມຮູ້ຫຼື ກໍ່ພໍພຽງແຕ່ເສັ້ງຜ່ານ ປ ຜ ເທົ່ານັ້ນ (ໄດ້ແຊກ). ໃນສ່ວນເລິກຫົວໃຈຂອງເຂົາຍັງຄຶດວົນວຽນຫາ ແຕ່ໃບໜ້າຂອງ ດາວອນ. ນາງໃນດວງໃຈຊຶ່ງເປັນຍິງໃນຝັນ. ໃນທີ່ສຸດທອງພັນກໍ່ຕັດສິນໃຈໄດ້ຢ່າງຖືກຕ້ອງທີ່ສຸດຕໍ່ອະນາຄົດຂອງເຂົາ.

- ສະຫາຍທອງພັນ ແພງຈະເລີນ ດ້ານຄຸນງານ ຄວາມດີສະຫາຍເປັນຜູ້ມີນ້ຳໃຈອົດທົນຕໍ່ວຽກທຸກຢ່າງ ໝັ່ນຮ່ຳຮຽນຄົ້ນຄວ້າການເມືອງຈົນສາມາດຮູ້ແຈ້ງທິດທາງນະໂຍບາຍຂອງພັກກໍ່ຄືລັດຖະບານຢູ່ໃນລະບຽບວິໄນ. ເສັຍສະຫຼະທຸກຢ່າງ ເພື່ອປະໂຫຍດສ່ວນ

ຮວມກຳແໜ້ນໃນທິດທາງຂອງກອງທັບ.

ດັ່ງນີ້ໃນໂອກາດ ບຸນສະຫຼອງກອງທັບ ໒໐/໑/໔໙ ນີ້ສະຫາຽຈຶ່ງໄດ້ຮັບໃບຍ້ອງຍໍຈາກສູນກາງພັກ.

ສຽງຕົບມືຂອງບັນດາເພື່ອນສະຫາຽທຸກຄົນພາຽໃນກອງພັນ ສ. ພ້ອມດ້ວຽປະຊາຊົນ ທີ່ໄປຮ່ວມມ່ວນຊື່ນສະຫຼອງ ໃນມື້ດັ່ງກ່າວ ເປັນພັນຄົນດັງສະໜັ່ນຫວັ່ນໄຫວ. ທຸກສາຽຕາຫຼຽວເບິ່ງເຂົາທີ່ກຳລັງຢືນຮັບເອົາໃບຍ້ອງຍໍ ແລະ ໃບຮັບຮອງໜ້າທີ່ຮັບຜິດຊອບ ຕໍ່ຜູ້ຕາງໜ້າກົມການເມືອງສູນກາງພັກ. ຄວາມຮູ້ສຶກຂອງທອງພັນໃນເວລານັ້ນບໍ່ມີອັນໃດກ່າວອອກມາໄດ້ ເພາະຖ້າເຂົາຈະເວົ້າຫຼື ສະແດງອອກມາກໍຕ້ອງຕັ້ງເປັນມື້ຈຶ່ງຈະສຸດ.

ເຂົານັ່ງຢູ່ຕັ່ງຮຽງຂ້າງເພື່ອນສະຫາຽໃນກອງພັນດຽວກັນ. ສາຽຕາຫຼຽວເບິ່ງທຸງຊາດ ຊຶ່ງກຳລັງປິວສະບັດປິ້ນເປື້ອງ ໄປມາຢູ່ປາຽເສົາ. ແລະ ອີກຜືນໜຶ່ງຕິດໄວ້ ຢູ່ຫ້ອງພິທີ. ອອນຂ້າງດ້ວຽຄຳຂວັນປຸກລະດົມຈິດໃຈກ້ອງທຸງຊາດລົງມາ ມີຮູບປະທານປະເທດ ແລະ ຮູບນາຽົກຕິດຮຽງກັນ, ທອງພັນພຶມພຳ ອ່ານຄຳຂວັນແຖວໜຶ່ງຫຼົບໄປຫຼົບມາຢ່າງພິນິດພິຈາລະນາ. "ບໍລິສຸດຕໍ່ຊາດຮັບໃຊ້ປະຊາຊົນຢ່າງສຸດໃຈ, ເສີມຂະຫຽາຽທາດແທ້ມູນເຊື້ອປະຕິວັດ, ສຳເລັດທຸກໜ້າທີ່".

ພິທີໄດ້ໝົດລົງ ພຽງເທົ່ານີ້. ສຳລັບຕອນກາງຄືນ ມື້ນີ້ຫຼັງຈາກກິນເຂົ້າແລ້ວຂໍແຈ້ງໃຫ້ບັນດາພໍ່ແມ່ອ້າຽເອື້ອຽນ້ອງ ແລະ ສະ

ຫາຽຫຼາຄົນຮູ້ວ່າກອງສິນລະປະກອນກອງທັບປົດປ່ຽ ປະຊາຊົນລາວ
ຈະໄດມາຮ່ວມສະແດງມ່ວນຊື່ນນຳ.

ພຽງເທົ່ານີ້ເອງ, ທອງພັນໄດ້ຍິນ ກໍ່ມີຄວາມຮູ້ສຶກຕື່ນເຕັ້ນ
ຂຶ້ນມາຢ່າງເຫັນໄດ້ກັບຕາ. ແຕ່ກໍ່ບໍ່ໄດ້ສະແດງໃຫ້ເພື່ອນສະຫາຽຮູ້
ຫຍັງ, ເຂົາຄິດພຽງແຕ່ວ່າ, ການມາສະແດງຂອງກອງສິນລະປະ
ກອນຄັ້ງນີ້ແມ່ນເພື່ອກ່ອມຂວັນປຸກລະດົມຈິດໃຈ ກ້າແຂງດ້ວຽສຽງ
ເພງປະຕິວັດຊຶ່ງມີເນື້ອໃນ ອັນເລິກເຊິ່ງ, ແລະ ແນ່ນອນທີ່ສຸດດາ
ວອນຕ້ອງມາ...

- ສະຫາຽທອງພັນ. ຕອນຄ່ຳມື້ນີ້ຂໍສະແດງຄວາມສາມາດ
ຈັກໜ່ຽຊິໄດ້ບໍ?

ສະຫາຽຄະນະກອງພັນ ຖາມເຂົາຍິ້ມໆ. ທ່າທາງເປັນກັນ
ເອງຕະຫຼອດເວລາ. ພ້ອມກັບເອົາມືຈັບບ່າດ້ວຽຄວາມຮັກແພງ.

- ສະຫາຽຊິໃຫ້ເຮັດອັນໃດນໍ?

- ຂຶ້ນໄປຮ້ອງເພງຢູ່ເທິງ ເວທີສະແດງ ຮ່ວມກັບກອງສິນ
ລະປະກອນ ເພື່ອໃຫ້ທຸກຄົນຮູ້ວ່າ, ກອງພັນ ສ ຂອງເຮົາບໍ່ຫງ່ວມ
ເຫງົາມີແຕ່ເບີກບານມ່ວນຊື່ນ ເຮັດວຽກງານໄດ້ທຸກດ້ານ. ພໍຊິໄດ້
ບໍ່ລະ?.

ທອງພັນຫຼຽວໜ້າເບິ່ງສະຫາຽຄະນະກອງພັນດ້ວຽໃບໜ້າ
ຍິ້ມແຍ້ມແຈ່ມໃສ. ເພື່ອໃຫ້ຮູ້ເຖິງ ຄວາມສາມາດໃນຕົນຕົວ ທີ່ມີຢູ່
ແລ້ວ.

- ໄດ້! ສະຫາຍ ເຮົາປະຕິບັດຕາມ. ຂໍໃຫ້ເຊື່ອໝັ້ນ.

- ຈົ່ງຊູແໝ໋ະ ເຮົາຂໍຊົມເຊີຍ. ຊິຮ້ອງເພງຫຍັງບໍລະ ?.

- ຮ້ອງສາມເພງ ຕິດກັນຄື ລາຕີແນວໜ້າ. ສົ່ງພອນປີໃໝ່ ແລະ ເພງດາວລ້ອມເດືອນ.

- ສະຫາຍກັບໄປຕຽມຕົວໄດ້ແລ້ວ!

ຫຼັງຈາກນັ້ນຕໍ່ມາທອງພັນກໍພະຍາຍາມ ຊ້ອມເພງກັບເພື່ອນສະຫາຍດຽວກັນເພື່ອບໍ່ໃຫ້ຂ້ອງຄາ ວັກຕອນຕ່າງໆ. ຈິດໃຈທັງຕື່ນເຕັ້ນດີໃຈ...ເພາະເປັນຄັ້ງທຳອິດ ທີ່ເຂົາຈະຕ້ອງຂຶ້ນເວທີ ຮ້ອງເພງຕໍ່ໜ້າບັນດາປະຊາຊົນ ແລະເພື່ອນສະຫາຍທັງຫຼາຍ. ສຳລັບດາວອນນັ້ນເຖິງນາງຈະມາຄ່ຳຄືນນີ້ກໍຕາມ, ແຕ່ນາງມາເພື່ອປະຕິບັດໜ້າທີ່ຂອງນາງ ແລະ ຄົງບໍ່ຮູ້ດອກວ່າຜູ້ທີ່ຫຼົງຮັກນາງຂ້າງດຽວໄດ້ມາຢູ່ທີ່ນີ້. ແນ່ນອນເຂົາຕັດສິນໃຈຈະບໍ່ພົວພັນແລະຄຶດເຖິງນາງອີກ, ເພາະເຫັນວ່າໜ້າທີ່ວຽກງານໃນເວລານີ້ຍັງບໍ່ເໝາະສົມທີ່ຈະເວົ້າເຖິງບັນຫາການມີຄອບຄົວ, ເຂົາຈະເບິ່ງນາງໄປງຽບໆ, ຈະເປັນ ເທົ່າໃດປີກໍຕາມ, ເພື່ອຊາດ ເພື່ອປະຊາຊົນ, ເມື່ອປະຊາຊົນມີຄວາມສຸກ ຊາດບໍ່ມີສັດຕູມາຮາວີແລ້ວການມີຄອບຄົວກໍຈະມີແຕ່ຄວາມສຸກ...

ລົມພັດມາເປັນຮູດ, ຕົ້ນໄມ້ອ້ອມຂ້າງຄ້າຍກ່ອງໄກວໄປມາຄ່ຽງ, ຜ້າຈອງຄຶງກັ້ງຢູ່ເດີ່ນແລະຜ້າເອ້ເທິງເວທີຖືກລົມພັດເໜັງຕີງເປັນເຍືອບໆ. ໄຟຟ້າຮຸ່ງແຈ້ງສະຫວ່າງຫຼຽວໄປແຕ່ໄກເຫັນພະ

ນັກງານກຳລັງຈັດຕຽມສິ່ງຂອງທຸກຢ່າງ ໃນການປະດັບປະດາເທິງເວທີ. ປະຊາຊົນທະຍອຍກັນເຂົ້າມາ ຢ່າງໜາແໜ້ນ ກະປະມານເກືອບສອງພັນຄົນ. ທອງພັນນັ່ງຢູ່ຕັ່ງຊຶ່ງເຮັດດ້ວຍໄມ້ ເປັນລຳຢູ່ຕໍ່ໜ້າເຮືອນພັກສາມາດຫຼຽວເຫັນການເຄື່ອນໄຫວເທິງເວທີ...

- ສະຫາຍທອງພັນ ໄປນັ່ງຕຽມຕົວຢູ່ຕໍ່ໜ້າເວທີພຸ້ນແມ້.

- ອ່ຍເນາະ! ບຸນມີນີ້ກະດາຍມີແຕ່ກວນເຮົາ.

- ເຮົາວ່າສະຫາຍຄືຊິດີໃຈຫຼາຍແມ່ນບໍ່?

- ດີໃຈຫຍັງ?

- ຢ່າເຮັດຕີຖະແຫຼງ. ເຫັນບໍ່ຫັ້ນກຳລັງຍ່າງອອກມາໜ້າຮ້ານເວທີ. ເຮົາຈື່ໄດ້ຕ້ອງແມ່ນນັກຮ້ອງ ຜູ້ທີ່ສະຫາຍລົມກັບລາວຢູ່ເດີ່ນທາດຫຼວງປີກາຍນີ້. ເຮົາຈື່ໄດ້ບໍ່ຜິດ.

- ສະຫາຍຈື່ບ່ອນໃດ. ບຸນມີ?

- ເຮົາຈື່ໄດ້ລາວມີຂີ້ແມງວັນຈັບຢູ່ແກ້ມຊ້າຍ ບ່ອນລາວຍິ້ມຫັ້ນແຫຼະ ຕອນເຮົາໄປແປງແລະຈັດເຄື່ອງຢູ່ເທິງເວທີເຮົາສັງເກດເບິ່ງລາວຄັກໆ...

- ບໍ່ແມ່ນສະຫາຍຕາລາຍບໍ?

ທອງພັນຖາມໝູ່ດ້ວຍໜ້າຕາເສີຍ ພະຍາຍາມບໍ່ສະແດງສີໜ້າຕື່ນເຕັ້ນໃຫ້ເພື່ອນຮູ້ຈັກ.

- ໂອຍ...! ແມ່ນແລ້ວທອງພັນໂຄສົກປະກາດຕອນລາວຮ້ອງເພງຈົບຕອນມັກລາວຊື່ ດາວອນ. ຄັກໆ ຜູ້ດຽວກັນຫັ້ນແຫຼວ.

ໄປ່...ໄປ.

ບຸນມີດຶງແຂນທອງພັນຍ່າງໄປຫາເວທີຜ່າປະຊາຊົນໄປແສງຕາເຂົາຫຼຽວເບິ່ງເວທີບໍ່ຂາດລະຍະ.

- ຢືນເບິ່ງຢູ່ນີ້ກໍເຫັນ ແລະ ໄດ້ຍິນ ແລ້ວບຸນມີ. ກົ່ງເອົາໄວ້ໃຫ້ ປະຊາຊົນນັ່ງເບິ່ງ. ພວກເຮົາບໍ່ຈຳເປັນດອກ, ເພາະປະຊາຊົນບາງຄົນກໍອຸ້ມລູກຈູງຫຼານມາເບິ່ງ.

- ເອົາ! ຊັ້ນກະຢືນຢູ່ນີ້ແຫຼະເນາະທອງພັນ.

- ອື່...

ຕໍ່ໄປນີ້ແມ່ນນັກຮ້ອງສິນລະປະກອນປະຈຳກອງພັນຂອງເຮົາຊື່ສະຫາຍທອງພັນ ແພງຈະເລີນ. ຈະມາຮ້ອງເພງໃຫ້ຊື່ວ່າ ລາຕີແນວໜ້າ ສົ່ງພອນປີໃໝ່ ແລະ ດາວລອມເດືອນ ນີ້ ເພງ ລຽນຕິດກັນ.

- ໄປໄວແດ່ແມ້ທອງພັນ!

ຊາຍໜຸ່ມຍ່າງສີໄວງຂຶ້ນເວທີ.ຂະນະທີ່ເຂົາກຳລັງຈະຍ່າງຂຶ້ນເວທີນັ້ນ ແສງຕາອັນແຫຼມຄົມສອງໜ່ວຍ ສັກສຸມໃສ່ໃບໜ້າຂອງເຂົາເຮັດໃຫ້ຈິດໃຈ ຫວັ່ນໄຫວໄປຊົ່ວຄະນະ ນາງຍິ້ມໃສ່ແລ້ວກໍ...

- ເຊີນ...ອ້າຍ.

ທອງພັນງຶກຫົວຕອບພ້ອມກັບຍິ້ມໃສ່ນາງເຂົາຍ່າງອອກໜ້າເວທີເຫັນເພື່ອນ ນັກດົນຕີກຳລັງຕຽມ ເສບຢ່າງເອົາໃຈໃສ່ ເຂົາ

ງອ້າກໜ້າໄປທາງປະຕູເຫັນໃບໜ້າອັນຂາວນວນ ແລະຮອຍຍິ້ມອັນພິມໃຈສິ່ງໃຫ້ເຂົາຢ່າງບໍລິສຸດ.

ສາມເພງຮ້ອງ ລຽນຕິດກັນຈົບລົງ. ສຽງຕົບມືຮ້ອງໂຮ່ຈົມເຊີຍດັງສະໜັ່ນຫວັ່ນໄຫວທົ່ວບໍລິເວນ ມີບາງຄົນຮ້ອງຂຶ້ນວ່າ: ໃຫ້ຮ້ອງຕໍ່ອີກຈັກສອງເພງ. ທອງພັນຍ່າງໄປຈັບມືສະແດງຄວາມດີໃຈຕໍ່ນັກດົນຕີທຸກຄົນແລ້ວກໍໄປຫຼັງເວທີ.

- ອ້າຍຮ້ອງເພງໄດ້ມ່ວນຫຼາຍ.

ທອງພັນຍືນຈົ້ງຢູ່ດົນເຕີບແສງຕາສີ່ໜ່ວຍ ປະທະກັນຢ່າງ-ແຮງຢ່າງມີຄວາມໝາຍ. ຫຼັງຈາກນັ້ນບັນດາເອື້ອຍນ້ອງ ນັກຮ້ອງທຸກຄົນກໍສະແດງຄວາມດີໃຈ ຕໍ່ເຂົາທີ່ສາມາດຮ້ອງເພງໄດ້ດີ ເກີນຄວາມທີ່ທຸກຄົນກະຕວງເອົາໄວ້.

- ບໍ່ມ່ວນທໍ່ນ້ອງ ແລະ ເພື່ອນສະຫາຍທີ່ເປັນນັກຮ້ອງເພງດອກ.

- ກໍ່ຮູ້ຢູ່ອ້າຍທອງພັນ ແຕ່ວ່າອ້າຍບໍ່ແມ່ນນັກຮ້ອງແຕ່ກໍ່ຮ້ອງເພງໄດ້ດີມີຊີວິດຊີວາ.

- ແຕ່ພຸ້ນມາດົນເຕີບແລ້ວໃດເນາະບໍ່ເຫັນກັນ ດາວອນ.

- ຄັນຊັ້ນອ້າຍເດເຂົ້າຮ່ວມການປະຕິວັດດົນປານໃດແລ້ວ.

- ແຕ່ຈາກນ້ອງມານັ້ນພຸ້ນແຫຼະ!

- ໂອ້...! ນ້ອງຂໍຊົມເຊີຍ ນ້ຳໃຈຂອງອ້າຍ, ຖ້າເປັນແນວນັ້ນແລ້ວ ເຮົາທັງສອງ ຈະໄດ້ພົບກັນ ເລື້ອຍໆ ແລ້ວ...ສິ່ງທີ່

ປະກົດ...

ພໍດີເວລານັ້ນເປັນຮອບຂອງນາງອອກໄປຮ້ອງເພງ. ສຽງໂຄສົກປະກາດຊື່ນາງສົ້ນສຸດລົງດົນຕີກໍເລີ່ມເຮັດໃຫ້ທັງສອງຈາກກັນດ້ວຍໜ້າທີ່ຄົນລະແນວ. ສ່ວນທອງພັນເອງ, ກໍພໍດີເຖິງເວລາໄປເວນຍາມຕາມໜ້າທີ່. ເຂົາຍ່າງລົງຮ້ານເວທີດ້ວຍຈິດໃຈຊື່ນບານ. ປະກອບກັບສຽງເພງອັນມ່ວນຊື່ນປຸກໃຈດັງເຂົ້າ ໂສດປະສາດທຸກຂໍ້ຄວາມ, ທັງຍ່າງທັງຄຶດເຖິງຄຳເວົ້າຂໍ້ສຸດທ້າຍກ່ອນຈະຈາກກັນວ່າ, ເຮົາຕ້ອງພົບກັນເລື້ອຍໆ. ສິ່ງທີ່ປະກົດ...ມັນເປັນຄຳເວົ້າ ພໍໃຫ້ຊາຍໜຸ່ມຄຶດຫຼົບໜ້າຫຼົບຫຼັງ ບໍ່ມີບ່ອນອອກ, ຫາກດາວອູ່ນເວົ້າສຸດເຂົາຈະຕອບນາງ ແລະ ຈະຮູ້ຈຸດໝາຍ ປາຍທາງ, ພ້ອມກັບຈະເປີດຄວາມໃນໃຈທຸກຢ່າງທີ່ຊັ່ງໄວ້ໃນຫົວໃຈ ມາໄດ້ຕັ້ງປີກ່ວາອອກໃຫ້ນາງຮູ້ຈະໄດ້ຫາຍສົງໄສ. ພໍຍ່າງມາເຖິງ ບ່ອນພິທີຕອນສວາຍນັ້ນ. ດອກໄຟຟ້າສອງໜ່ວຍ ຮຸ່ງແຈ້ງສະຫວ່າງ ສາມາດອ່ານຄຳຂວັນໄດ້ທຸກຂໍ້ຄວາມ. ເຮັດໃຫ້ຊາຍໜຸ່ມຕ້ອງເຊົາຄຶດເຖິງບັນຫາທີ່ຜ່ານມາໄດ້ທັນທ່ວງທີ. ເຂົາທົບທວນຄຳຂວັນທ່ອງຂຶ້ນໃຈໃຫ້ໄດ້ກັບປາກໃນຄຳຂວັນທີ່ວ່າ: "ບໍລິສຸດຕໍ່ຊາດ, ຮັບໃຊ້ປະຊາຊົນຢ່າງສຸດໃຈ, ເສີມຂະຫຍາຍທາດແທ້ ມູນເຊື້ອປະຕິວັດ, ສຳເລັດທຸກໜ້າທີ່".



# ວິລະກຳ ກອງຫຼອນ

ໂດຍ. ປູມ ຈູພລະມຸນທ໌

- ນັບຕັ້ງແຕ່ໄດ້ມີ ການໂຄ່ນລົ້ມລະບອບການປົກຄອງເກົ່າຂອງພວກສັກດີນາ ປະຕິການ ອັນເປັນກົງຈັກຮັບໃຊ້ ແຜນການລ່າເມືອງຂຶ້ນແບບໃໝ່ຂອງຈັກກະພັດອາເມລິກາສຳເລັດລົງແລ້ວເບິ່ງຄືວ່າບ້ານນ້ຳກຽງ ເມືອງນາຊາຍທອງແຂວງວຽງຈັນ ໄດ້ກັບກາຍຈາກສະພາບສັງຄົມອັນເນົ່າເປື່ອຍ ມາເປັນໝູ່ບ້ານທີ່ມີຊີວິດຊີວາ, ຜູ້ຄົນພາຍໃນໝູ່ບ້ານ ຕ່າງພາກັນຕັ້ງໜ້າ ປະກອບສ່ວນເຮັດວຽກການຂອງໃຜລາວ ດ້ວຍຄວາມຕັ້ງອົກຕັ້ງໃຈ ໂດຍມີຄວາມຫວັງໃນອະນາຄົດຂອງຕົນຫຼາຍຍິ່ງຂຶ້ນ. ການອອກແຮງໃນດ້ານຜະລິດຜົນນັ້ນແມ່ນໄດ້ຮັບໝາກຜົນຢ່າງເຕັມສ່ວນບໍ່ວ່າຈະເປັນເຂົ້າຢູ່ໃນນາ ປາຢູ່ໃນໜອງ ຕະຫຼອດເຖິງຜົນຜະລິດອື່ນໆ ຢູ່ຕາມໄຮ່ແລະສວນ.

ຊາວບ້ານນ້ຳກຽງຕ່າງກໍໄດ້ຮັບກັບຄວາມເບີກບານມ່ວນຊື່ນໃນຈິດໃນໃຈໄປຕາມ ໆ ກັນ..... ອັນນັ້ນກໍແມ່ນໝາກຜົນທາງດ້ານການຜະລິດຂອງພວກຕົນບໍ່ໄດ້ຖືກພວກນາຍທຶນພໍ່ຄ້າໜ້າເລືອດ

ຂູດຣີດພົນພະລິດຄືແຕ່ກ່ອນ ບໍ່ມີພວກສັກດີນາປະຕິການ ໃຊ້ອຳນາດວາດສະໜາໄປນັ່ງຊີ້ໄມ້ຊີ້ມື ສັ່ງກິນງົວກິນຄວາຍ ຕະຫຼອດເຖິງໝູໝາເປັດໄກ່ ນອກຈາກນັ້ນບັນດາຊາຍໜຸ່ມຍິງສາວ ໃນໝູ່ບ້ານດັ່ງກ່າວ ຕ່າງກໍມີໃບໜ້າມອມຊື່ນເບີກບານ ຍ້ອນບໍ່ໄດ້ຖືກລົບກວນໃນຊີວິດຄວາມເປັນຢູ່ຂອງຕົນ ອັນຜິດໄປຈາກສະໄໝພວກສັກດີນາປະຕິການນັ່ງຄອງບ້ານນັ່ງກິນເມືອງ ເຊິ່ງໄດ້ເຮັດໃຫ້ຊີວິດຂອງຄົນໄດ້ຮັບກັບຄວາມທຸກເດືອດຮ້ອນຢ່າງບໍ່ມີສິ້ນສຸດ ບັນດາຊາຍໜຸ່ມຖືກຈັບໄປເປັນທະຫານສ່ວນຍິງສາວກໍ່ຖືກສັງຄົມວັດທະນະທຳອັນເປື່ອຍເນົ່າຂອງຈັກກະພັດອາເມລິກາ ແລະ ສັກດີນາປະຕິການ ເຮັດໃຫ້ກາວໄປສູ່ຄວາມມືດມົນ ຈົນພວກສັກດີນາປະຕິການ ພາກັນເວົ້າຈົນຕິດປາກວ່າ:

"ໃຜຢາກໄດ້ສາວນ້ອຍ ຕ້ອງເອົາເຫຼືອໄປອ່ອຍ ຢູ່ບ້ານນ້ຳກຽງ!"

- ຄວາມເວົ້າຖືກໝິ່ນປະໝາດ ດັ່ງກ່າວນີ້ ບໍ່ແມ່ນເປັນການຢຽດຢາມແຕ່ ສາວຊາວນ້ຳກຽງເທົ່ານັ້ນ, ແຕ່ມັນໄດ້ກາຍເປັນເຊື້ອໄຟແຫ່ງຄວາມແຄ້ນ ເຂົ້າໄປເກາະສຸມຢູ່ໃນຫົວໃຈຂອງຊາວບ້ານນ້ຳກຽງທຸກຄົນ ແຕ່ຖ້າຫາກມີຜູ້ໃດບໍ່ສາມາດອົດທົນຕໍ່ ຄຳກ່າວຖາກຖາງນີ້ໄດ້ກໍ່ຖືກພວກສັກດີນາປະຕິການຈັບທຸບຕີສົ່ງເຂົ້າຄຸກໂດຍບໍ່ມີການຕັດສິນຢູ່ທີ່ສານຍຸດຕິທັມ, ລາງຄົນກໍຖືກເກັບໄປຢ່າງບໍ່ຮູ້ຮອຍຮຽຈົນເຖິງເວລານີ້ ຂະນະດຽວກັນທະຫານປະຕິການ ກໍໃຊ້ອາວຸດ

ນາບຂູ່ຊາວບ້ານນ້ຳກຽງໃຫ້ຕົກຢູ່ໃນສະພາບຢ້ານກົວສັ່ນເຊັນ ຢູ່ຕະຫຼອດເວລາ, ການລັກງົວຄວາຍໃນຍາມຄ່ຳຄືນຈາກພູ່ຄົນຢູ່ໃນເຄື່ອງແບບພ້ອມດ້ວຍອາວຸດອັນທັນສະໄໝຂອງພວກທະຫານປະຕິການນັ້ນໄດ້ເຮັດໃຫ້ຊາວບ້ານນ້ຳກຽງອົກສັ່ນຂວັນເສັຽພາກັນນອນຕາບໍ່ຫຼັບ.

- ແຕ່ປະຈຸບັນນີ້, ນ້ຳກຽງບໍ່ໄດ້ຕົກຢູ່ໃນສະພາບແບບຊາວບ້ານນອນຕາບໍ່ຫຼັບຄືເກົ່ານັ້ນແລ້ວ, ຊາວບ້ານນ້ຳກຽງໄດ້ມີຊີວິດໃໝ່ ແລະມີຄວາມກ້າວໜ້າອັນແສນສະຫງ່າງາມ, ທຸກຄົນພາກັນພາກພູມໃຈເຊື່ອໝັ້ນຕໍ່ລະບອບການປົກຄອງໃໝ່ ເພື່ອສ້າງສັງຄົມໃໝ່ໃຫ້ມີຄວາມກ້າວໜ້າ ຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ.

"ພວກເຂົາຕື່ນຕົວໃນການໃຊ້ແຮງງານ ໂດຍບໍ່ມີໃຜມາຂູດຮີດ ພວກເຂົາພໍໃຈແລະພາກພູມໃຈທີ່ປະເທດໄດ້ມີເອກະລາດແລະມີອະທິປະໄຕຢ່າງສົມບູນ ສິ່ງສຳຄັນອີກແນວໜຶ່ງກໍຄືພວກເຂົາເປັນເຈົ້າຕົນເອງຢ່າງແທ້ຈິງ!" ອັນນີ້ແມ່ນຄວາມຮູ້ສຶກ ຂອງຊາວບ້ານນ້ຳກຽງທີ່ມີເອກະພາບ ເປັນນ້ຳໜຶ່ງໃຈດຽວກັນຕໍ່ລະບອບການປົກຄອງຂອງສັງຄົມໃໝ່.

- ຄວາມພໍໃຈຢ່າງເຕັມສ່ວນ ຕໍ່ລະບອບການປົກຄອງໃໝ່ນັ້ນ ຊາວບ້ານນ້ຳກຽງບໍ່ແມ່ນວ່າ ມີແຕ່ປາກເວົ້າຊື່ໆເທົ່ານັ້ນ ແຕ່ມີຜົນງານປະກອບສ່ວນທາງດ້ານພາກປະຕິບັດຢ່າງເຖິງຖອງ, ອັນນີ້

ແມ່ນສັງເກດໄດ້ວ່າຮຽງຈາກການພ້ອມພຽງໃນດ້ານທ່ຳຮຽນ ຍົກລະດັບຄວາມຮູ້ໃຫ້ສູງຂຶ້ນ, ປະກອບສ່ວນອອກແຮງງານໃນການຜະລິດພົນ ເພີ່ມທະວີປ້ອງກັນຄວາມສະຫງົບ ແລະ ຕໍ່ສູ້ຕານກົນອຸບາຍເລຫຼ່ຽມແຊກແຊງນາງເພທຳລາຍຂອງສັດຕູ. ກ່ຽວກັບເລື່ອງນັ້ນບັນດາຫນຸ່ມກອງຫຼອນໂດຍການນຳ ຂອງທ້າວທອງນັ້ນ ໄດ້ເອົາວຽກເອົາການຕັ້ງຫນ້າກຳກັບບັນຊາດ້ວຍມານະຈິດ ອັນເດັດດ່ຽວແລະບໍ່ອ່ອນຍອມ ປະຕິບັດຫຼອນຫນ້າທີ່ຂອງຕົນທຸກຢ່າງ ເມື່ອໄດ້ຮັບຄຳສັ່ງຈາກຂັ້ນເທິງ.

– ທອງ, ເປັນຊາຍຫນຸ່ມທີ່ໝອມ ກ້າວຫນ້າຕ້າວຫັນມີອາຍຸໄດ້ ໒໐ ປີແລ້ວ ເມື່ອກ່ອນຫນ້ານັ້ນສາມປີທອງໝອມ ຮຽນມັດທະຍົມຕອນຕົ້ນປີສຸດທ້າຍ ຢູ່ທີ່ວິທະຍາໄລວຽງຈັນ ແຕ່ຄອບຄົວຂອງເຂົາຖືກບີບຄັ້ນຢ່າງຮຸນແຮງຈາກພະຍາຄຳຫຼາຍ ສັກດີນາຫນ້າເລືອດໄດ້ເຮັດເອກະສານປອມເພື່ອສໍ້ໂກງ ທີ່ນາຈາກພໍ່ຂອງເຂົາຢ່າງໄຮ້ມະນຸດສະທຳ ຈົນເຖິງກັບວ່າພໍ່ຜູ້ບັງເກີດເກົ້າ ຕ້ອງເຂົ້າຄຸກໄປ ຊ້ຳບໍ່ຫນຳດິນນາທີ່ເຄີຍທຳມາຫາກິນມາຕັ້ງແຕ່ກ່ອນຕ້ອງຖືກຍຶດໄປ ເສັຽທັງນາ, ພໍ່ກໍເຂົ້າຄຸກ ແລະເຂົາກໍ່ຈຳຕ້ອງອອກຈາກໂຮງຮຽນເພື່ອມາຊ່ວຍວຽກທາງເຮືອນໃນການລ້ຽງແມ່. ຄວາມຄັ່ງແຄ້ນຈາກການກະທຳຂອງພະຍາຄຳຫຼາຍ ຜູ້ສ້າງຄວາມຮັ່ງມີຢູ່ເທິງຄວາມທຸກຍາກຂອງເພື່ອນມະນຸດນຳກັນເອງນັ້ນ ໄດ້ເຮັດໃຫ້ທອງ ເກີດມີຄວາມຮູ້ສຶກຢາກຕໍ່ສູ້ແລະນາງເພຄວາມອະຍຸຕິທັມທຸກຢ່າງ ໃນເມື່ອເຂົາໄດ້

ຖືກມອບໝາຍໃຫ້ເປັນຫົວໜ້າກອງຫຼອນປະຈຳບ້ານ ເຂົາຈຶ່ງຍິນດີ ຂັນອາສາຮັບເອົາ ດ້ວຍຄວາມເຕັມໃຈເປັນຢ່າງຍິ່ງ.

"ພວກເຮົາຕ້ອງຮັກສາ ຄວາມສະຫງົບສຸກ ໃຫ້ແກ່ໝູ່ບ້ານ ຂອງເຮົາຢ່າງສຸດຄວາມສາມາດ, ຕ້ອງທັບມ້າງດັບສູນ ທຸກການເຄື່ອນໄຫວຂອງພວກສັກດີນາປະຕິການ, ພວກເຮົາຕ້ອງເສັຽ ສະຫຼະຄວາມສຸກສ່ວນຕົວ ເພື່ອຜົນປະໂຫຍດແລະຄວາມສະຫງົບ ຂອງສ່ວນລວມ ທອງມັກເວົ້າໃນທຳນອງນີ້ ກັບໝູ່ຄູ່ສະຫາຍ ກອງຫຼອນ ດ້ວຍຄວາມຕັ້ງໃຈອັນເດັດດ່ຽວຢູ່ສະເໝີ...

- ຈາກການນຳພາຂອງທ້າວທອງນັ້ນເອງ ໄດ້ເຮັດໃຫ້ໝູ່ບ້ານນ້ຳກຽງຢູ່ໃນຄວາມສະຫງົບ ແລະໄດ້ຮັບກັບຄວາມຮົ່ມເຢັນຕະຫຼອດມາ, ນອກຈາກຮັບຜິດຊອບໃນດ້ານຮັກສາຄວາມສະຫງົບສຸກໃຫ້ແກ່ໝູ່ບ້ານດັ່ງກ່າວນັ້ນແລ້ວ, ທອງຍັງຫາໂອກາດຫວ່າງວຽກປະຈຳວັນຈັກຊວນອອນໝູ່ ສະຫາຍກອງຫຼອນມາຮ່ວມສຶກສາ ເອກະສານລາຍງານການເມືອງ, ຖະແຫຼງການຂອງກອງປະຊຸມໃຫຍ່ຜູ້ແທນປະຊາຊົນຢ່າງກວ້າງຂວາງເລິກເຊິ່ງ ເພື່ອເປັນພື້ນຖານໃຫ້ແກ່ຄວາມເປັນເອກະພາບທາງດ້ານແນວຄິດ ໂດຍທີ່ທອງໄດ້ໃຫ້ເຫດຜົນ ກັບໝູ່ສະຫາຍກອງຫຼອນນຳກັນວ່າ:

"ເມື່ອພວກເຮົາມີໂອກາດໄດ້ຮຽນຮູ້ເລື່ອງການເມືອງແນວນີ້ແລ້ວຈຶ່ງຮີບກ້າວເຂົ້າໄປເພື່ອປັດເປົ່າຄວາມໂງ່ຈ້າຂອງພວກເຮົາ ລັດຖະບານສັງຄົມໃໝ່ທີ່ກ້າວໜ້າຂອງພວກເຮົາ ແມ່ນມີຄວາມປະ

ສົ່ງພ້ອມທັງຊຸກຍູ້ຄົນໃນຊາດ ໃຫ້ຮຽນຮູ້ຫຼາຍໆ. ສະໄໝກ່ອນພວກເຮົາບໍ່ມີໂອກາດໄດ້ຮຽນຮູ້ເລື່ອງການເມືອງແນວນີ້ດອກ, ຍ້ອນພວກສັກດີນາປະຕິການສະຫງວນຄວາມອັນທີ່ເອີ້ນວ່າ ຮັກຊາດໄວ້ໃຫ້ແກ່ພວກເຂົາເທົ່ານັ້ນ" ທອງເວົ້າຍັງບໍ່ສຸດຄວາມກໍມີສະຫາຍກອງຫຼອນຜູ້ໜຶ່ງເວົ້າສອດຂຶ້ນວ່າ:

"ກໍຍ້ອນຮັກຊາດແບບຜີບ້າ ແນວນັ້ນລະເອີ້ຍ! ຈຶ່ງເຮັດໃຫ້ບ້ານເມືອງໄດ້ຮັບກັບ ຄວາມເດືອດຮ້ອນໄປຕາມໆກັນ ພວກລັດຖະມົນຕີມີຖານະປານເທວະດາໃຊ້ອະພິສິດກອບໂກຍກິນບ້ານກິນເມືອງເປັນອຶກກະທຶກ ສ່ວນພວກຜູ້ແທນກໍປານແມ່ຈ້າງນາງເລງ ຂາຍຕົວໃຫ້ແກ່ກຸ່ມອະພິສິດ ພວກຂຸນເສິກປະຕິການແຕ່ລະຄົນ ກໍໃຊ້ປືນເປັນໃຫຍ່ບີບບັ້ນສີໄຟປະຊາຊົນ ເພື່ອຈັບຈ່ອງ ຍາດເອົາດິນດອນຂອງປະຊາຊົນ ພວກຂຸນເສິກປະຕິການແຕ່ລະພວກພາກັນຮັ່ງມີຍ້ອນຄ້າຂອງເຖື່ອນ ສາງສັງຄົມແຕ່ລະທ້ອງຖິ່ນເຕັມໄປດ້ວຍຄວາມເປິເປື້ອນ.

"ຄວາມຄິດຂອງພວກສະຫາຍນັ້ນ ເປັນການຖືກຕ້ອງ ແລ້ວເພື່ອຄວາມສະດວກ ແກ່ການກອບໂກຍກິນບ້ານກິນເມືອງ ຢ່າງບໍ່ມີເມືອງພໍ ຂອງພວກມັນນັ້ນລະ ພວກມັນຈຶ່ງກີດກັ້ນປະຊາຊົນ ບໍ່ໃຫ້ຮູ້ເລື່ອງການບ້ານ ການເມືອງ" ທອງກ່າວສະໜັບສະໜູນຄວາມເວົ້າຂອງສະຫາຍກອງຫຼອນ.

"ໝາຍຄວາມວ່າເວລານີ້ ປະຊາຊົນທຸກຖ້ວນໜ້າ ພ້ອມມ່ວນຊື່ນເບີກບານ ທ່າມກາງບັນຍາກາດຟົດຟື້ນປະຕິວັດ!" ສະຫາຍ

ກອງຫຼອນອີກຄົນໜຶ່ງກ່າວສະຫຼຸບ.

"ຖືກຕ້ອງແລ້ວ" ທອງເຫັນດີນຳແນວຄິດຂອງສະຫາຍພ້ອມກັບສະແດງຄວາມຊົມຊື່ນຍິນດີປະກົດອອກມາທາງໃບໜ້າ ເມື່ອໄດ້ເຫັນສະຫາຍກອງຫຼອນພາກັນເຂົ້າໃຈຢ່າງຈະແຈ້ງ ເຖິງການຮຽນຮູ້ເອກະສານການເມືອງພວກເຂົາມີຈິດໃຈເປັນເອກະພາບນຳກັນ ໃນຄວາມຮູ້ສຶກບຸນຄຸນຕໍ່ພັກປະຊາຊົນປະຕິວັດລາວ ທີ່ໄດ້ຊີ້ແນວທາງແລະນຳພາຊີວິດຂອງພວກເຂົາໃຫ້ອອກຈາກມູມມືດ ກ້າວອອກມາສູ່ເສັ້ນທາງຊີວິດໃໝ່ອັນນາຄົດອັນສົດໃສ.

- ນອກຈາກນັ້ນແລ້ວທອງຍັງໄດ້ນຳພາສະຫາຍກອງຫຼອນໄປຊ່ວຍຊາວກອງພໍ່ປ້ານາສາວໃນໝູ່ບ້ານນ້ຳກຽງ ໂດຍບໍ່ເຫັນແກ່ກິນແລະບໍ່ເຫັນແກ່ຄວາມອິດເມື່ອຍ ດ້ວຍເຫດນີ້ຊາວບ້ານຈຶ່ງມີຄວາມພາກພູມໃຈແລະມີຄວາມໄວ້ໃຈໃນກອງຫຼອນຂອງພວກຕົນເປັນຢ່າງດີ. ມີລາງເທື່ອໄດ້ມີສະຫາຍກອງຫຼອນຂໍພັກຜ່ອນຍ້ອນເຮັດວຽກມາເມື່ອຍໃນຍາມກາງເວັນ ແຕ່ທອງກໍໄດ້ຍົກເຫດຜົນໃຫ້ບັນດາ ສະຫາຍກອງຫຼອນນຳກັນຮູ້ວ່າ:

"ການເສັຽສະຫຼະຄວາມສຸກສ່ວນຕົວເພື່ອຜົນປະໂຫຍດສ່ວນໂຮມເປັນຈຸດຢືນນັ້ນນັບວ່າເປັນການເສັຽສະຫຼະອັນປະເສີດ, ພວກເຮົາຢ່າລືມໜ້າທີ່ ຂອງພວກຊາວໜຸ່ມ ເຊິ່ງລັດຖະບານຖືວ່າເປັນກະດູກສັນຫຼັງຂອງຊາດ. ຈົ່ງເສີມຂະຫຍາຍບົດບາດຕະລູມບອນອອກໜ້າໄປກ່ອນໃນພາລະກິດຕໍ່ສູ້ ກໍ່ສ້າງ ແລະ ປົກປັກຮັກສາປະເທດ

ຊາດໃຫ້ມີເອກະລາດ ວັດທະນາຖາວອນ ອອກແຮງຮ່ຳຮຽນຍົກລະດັບຄວາມຮູ້ໃຫ້ສູງຂຶ້ນ ເພື່ອປະກອບສ່ວນອຸທິດເຫື່ອແຮງຂອງຕົນໃຫ້ແກ່ປະເທດຊາດ ນັບມື້ນັບຫຼາຍ".

ເມື່ອທອງໄດ້ຍົກເຫດຜົນອອກມາໃນທຳນອງນີ້ ຈຶ່ງເຮັດໃຫ້ບັນດາສະຫາຍກອງຫຼອນ ພາກັນເຫັນດີ ແລະ ມີຈິດໃຈຫ້າວຫັນຕໍ່ການຮັກສາຄວາມສະຫງົບສຸກ ໃຫ້ແກ່ໝູ່ບ້ານຂອງຕົນດ້ວຍຄວາມເຕັມອົກເຕັມໃຈ ໃນຄືນນັ້ນ ບັນດາກອງຫຼອນບ້ານນ້ຳກຽງທີ່ຫ້າວຫັນ ກໍ່ໄດ້ພ້ອມພາກັນເອົາໃຈໃສ່ຕໍ່ໜ້າທີ່ຂອງຕົນ ຢ່າງເຂັ້ມແຂງ ໂດຍມີການສັບປ່ຽນຈຸດໝາຍ ການຮັກສາເວນຍາມເປັນປະຈຳທຸກວັນເຖິງແມ່ນວ່າໄດ້ມີການຮັກສາຄວາມສະຫງົບໝູ່ບ້ານດ້ວຍຄວາມລະມັດລະວັງພຽງໃດກໍ່ຕາມ ແຕ່ດ້ານຕາເວັນຕົກສ່ຽງເໜືອ ຂອງໝູ່ບ້ານຍັງຂາດ ການເວນຍາມກັນຢູ່. ທອງໄດ້ປຶກສາກັບສະຫາຍກອງຫຼອນນຳກັນວ່າ:

"ດ້ານນີ້ເຮົາເຫັນວ່າມີຄວາມສຳຄັນຢູ່ບໍ່ໜ້ອຍ ເຖິງແມ່ນວ່າພວກກອງຫຼອນບ້ານນາຊັບ ໄດ້ລັດຕົ້ນທາງໄວ້ແລ້ວກໍ່ຕາມ ແຕ່ເພື່ອຄວາມບໍ່ປະໝາດ, ພວກສັດຕູອາດເລັດລອດເຂົ້າມາປາຍທາງ ກໍ່ເປັນໄດ້ ອີກຢ່າງໜຶ່ງເຮົາກໍ່ບໍ່ຄວນລືມວ່າ ເສັ້ນທາງແຖວນີ້ ທະຫານປະຕິການເຄີຍມາຢູ່ ແລະ ໄດ້ຂູດຮີດພີ່ນ້ອງຂອງພວກເຮົາຈົນວ່ານ້ຳຕາຕົກໃນທ້ອງມາພໍແຮງແລ້ວ!"

ສະຫາຍກອງຫຼອນທັງຫຼາຍ ເມື່ອໄດ້ຟັງຄວາມຄິດເຫັນ

ຂອງຫອງແລ້ວ ຕ່າງກໍພາກັນເຫັນດີຢ່າງພ້ອມພຽງ ແຕ່ວ່າຈຸດຮັກ
ສາຄວາມສະຫງົບດັ່ງກ່າວນີ້ ມີຄົນບໍ່ພຽງພໍຍ້ອນວ່າ ຈຸດແຕ່ລະບ່ອນ
ນັ້ນແມ່ນມີຄວາມສຳຄັນ ທີ່ຈະຂາດກຳລັງຄົນແມ່ນບໍ່ໄດ້ເລີຍ ດັ່ງນັ້ນ
ຫອງຈຶ່ງຕັດສິນບັນຫາໃນເລື່ອງນີ້ແລ້ວ ຂັນອາສາຂຶ້ນວ່າ:

"ມັ້ນເຮົາຂໍໄປຜູກຮົ້ວກໍໄດ້ດອກ, ຖ້າໄດ້ຍິນສຽງປືນຂອງ
ເຮົາແລ້ວ ຂໍໃຫ້ໜ່ວຍຈຸດທີ່ ໒ ແລະ ຈຸດທີ່ ໔ ແບ່ງກຳລັງ ຟ້າວ
ໄປຫາຈຸດຂອງເຮົາໃນທັນທີ. ສ່ວນຈຸດອື່ນບໍ່ໃຫ້ເຄື່ອນຍ້າຍໄປທາງ
ໃດ ເປັນອັນຂາດ".

- ຫຼັງຈາກເຂົ້າໃຈກັນ ເປັນທີ່ແຈ່ມແຈ້ງແລ້ວ ບັນດາກອງ
ຫຼອນຈຶ່ງໄປຮັກສາຄວາມສະຫງົບຕາມຈຸດໝາຍຂອງໜ່ວຍໃຜລາວ
ພວກເຂົາບໍ່ໄດ້ຄິດເຖິງຄວາມອິດເມື່ອຍໃນການມາອົດຫຼັບອົດນອນ,
ບໍ່ຫວັ່ນໄຫວຕໍ່ອາກາດ ອັນແສນໜາວເຢັນ ທ່າມກາງ ອາຍໝອກ
ຂອງລາຕີການນັ້ນ, ສາຍຕາ ແລະຫູຂອງພວກເຂົາພະຍາຍາມສັງ
ເກດອາການເຄື່ອນໄຫວທຸກສິ່ງທຸກຢ່າງທີ່ເກີດຂຶ້ນ ຕາມບໍລິເວນໝູ່
ບ້ານນ້ຳກຽງ. ທຸກຄົນຢູ່ໃນທ່າກຽມພ້ອມຕອບຮັບທຸກເຫດການ ທີ່
ຈະເກີດຂຶ້ນມາ. ໃນວິນາທີໃດນາທີໜຶ່ງກໍອາດເປັນໄດ້, ສ່ວນຈຸດ
ໝາຍເຊິ່ງຫອງໄດ້ມາຮັກສາຄວາມສະຫງົບ ຢູ່ຜູກຮົ້ວນັ້ນ ໄດ້ຕື່ມ
ຄວາມລະມັດລະວັງ ໃນຕົວເອງພິເສດ ເຂົາຫາສະຖານທີ່ ກຳບັງ
ເຊື່ອງຕົວຢູ່ໃນເງົາມືດຂອງແຄມປ່າຢ່າງມິດໝີ່, ມືຂອງເຂົາກຳປືນ
ແອມສິບທົກ ໃນທ່າຕຽມພ້ອມ ເພື່ອຄວາມບໍ່ປະໝາດ, ລູກປືນແຕ່

ລະລູກເຂົາຖະໜອມມັນໄວ້ປານສິ່ງຂອງທີ່ມີຄ່າຍິ່ງບໍ່ຍອມໃຫ້ມີສຽງ ປີ້ນລົ້ນຂຶ້ນໂດຍບໍ່ມີເຫດຈຳເປັນ.

- ຂະນະນັ້ນເວລາໄດ້ຜ່ານໄປຮອດບ່າຍສອງໂມງກາງຄືນແລ້ວ. ບັນດາຊາວບ້ານນ້ຳກຽງໄດ້ພາກັນນອນຫຼັບຢ່າງມີຄວາມສຸກ ແຕ່ສາຍຕາຂອງບັນດາກອງຫຼອນຫຼັບລຶງໄດ້ຍາກເຕັມທີ ຍອນໜ້າທີ່ຂອງພວກເຂົາຮັບຜິດຊອບຢູ່ນັ້ນ ແມ່ນຮັກສາຄວາມສະຫງົບ ໃຫ້ແກ່ໝູ່ບ້ານດວຍຄວາມເອົາໃຈໃສ່ ເພື່ອລະວັງເຫດໄພຮ້າຍທີ່ຈະເກີດຂຶ້ນມາກໍ່ກວນຄວາມສະຫງົບສຸກຂອງພໍ່ແມ່ແລະອ້າຍເອື້ອຍນ້ອງຂອງພວກເຂົານັ້ນເອງ.

...ແຕ່ແລ້ວເຫດການຮ້າຍກໍເກີດຂຶ້ນມາຈົນໄດ້ໃນຄືນນັ້ນ

- ທອງໃຊສາຍຕາຜ່າຄວາມມືດຈ້ອງເບິ່ງເງົາມືດ ເຊິ່ງນອນ ຢ່າງຜ່ານທົ່ງນາ ເລາະແຄມປ່າ ມຸ່ງໜ້າມາທາງເຂົາ ໃນໄລຍະຫ່າງຫາສິບແມັດ ເພື່ອຄວາມແນ່ນອນໃຈ ໃນສາຍຕາຂອງຕົວເອງອີກຄັ້ງໜຶ່ງ ອັນນັ້ນກໍຢ້ານວ່າສາຍຕາຫຼອກຫຼອນອາດເກີດຄວາມເຂົ້າໃຈຜິດກໍເປັນໄດ້ ເຂົາຍົກຝ່າມືຂວາຂຶ້ນມາລູບຕາທັງສອງ ແລ້ວຈຶ່ງເບິ່ງການເຄື່ອນໄຫວ ຂອງເງົາມືດດັ່ງກ່າວ ອັນຄ່ອຍກ້າວຍ່າງເຂົ້າມາຫາທຸກໄລຍະ... ໃກ້ເຂົ້າມາສູ່ໄລຍະປະມານສິບແມັດ, ແລະຈົນເຊື່ອສາຍຕາໂຕເອງໄດ້ວ່າເງົາມືດດັ່ງກ່າວນັ້ນ ແມ່ນເປັນການເຄື່ອນໄຫວຂອງຄົນໂດຍແທ້ ເຊິ່ງມີຈຳນວນເຖິງສາມຄົນ! ຂະນະດຽວກັນເຂົາອົດຄິດບໍ່ໄດ້ວ່າຖະໜົນຫົນທາງກໍມີຢູ່ແລ້ວແຕ່ເປັນຫຍັງ

ບຸກຄົນທັງສາມຈຶ່ງບໍ່ຫ່ຽວຕາມທາງເສັ້ນນັ້ນ? ພວກເຂົາມີເຈຕະນາອັນໃດຈຶ່ງເລາະຜ່າຄວາມມືດມາຕາມແຄມປ່າແນວນີ້.

"ພວກສະຫາຍກອງຫຼອນບ້ານເຮົາ ຄົງບໍ່ມາໃນລັກສະນະນີ້ ທຸກຄົນຕ້ອງເຂົ້າໃຈ ແລະປະຕິບັດຕາມການຕົກລົງກັນໄວ້ ຖ້າແມ່ນແທ້ ຕ້ອງເວົ້າລົມຈາກັນ" ທອງຄິດໄປໃນດ້ານດີແລະຖາມຕົວເອງອີກວ່າ:

"ອາດເປັນສະຫາຍກອງຫຼອນບ້ານມາຈັບບໍ?".

– ເພື່ອຄວາມບໍ່ປະໝາດ ທອງຈັບປືນໃນລັກສະນະ ກຽມພ້ອມ ແລະບັງຕົວເອງໄວ້ໃນເງົາມືດກ່ອນທີ່ຈະຫຼຸດຄວາມເວົ້າຖາມອອກໄປວ່າ: "໔-໕ ... ບໍ?"...

"....." ມິດບໍ່ມີສຽງຕອບພ້ອມດຽວກັນບຸກຄົນທັງສາມທີ່ມາໃນເງົາມືດ ພາກັນລົ້ມຕົວນອນລົງ ແຕ່ກໍຍັງຢູ່ໃນສາຍຕາ ຂອງທອງໄດ້ເປັນຢ່າງດີ. ເມື່ອຮູບການເປັນແນວນັ້ນ ຈຶ່ງເຮັດໃຫ້ທອງຕ້ອງຍົກປືນຂຶ້ນໃນທ່າກຽມຍິງ ແຕ່ເພື່ອຄວາມແນ່ໃຈອີກຄັ້ງໜຶ່ງຈຶ່ງຮ້ອງຖາມຂຶ້ນອີກວ່າ:

"ມາຈັບ... ນີ້ນ້ຳກຽງ...ມາຈັບບໍ່...ນີ້ນ້ຳກຽງຖາມ" ແທນທີ່ຈະໄດ້ຍິນສຽງຄົນຕອບ ກໍກາຍເປັນສຽງປືນ ລັ່ນສຸມເຂົ້າມາຫາ...".

" ປັງ ! ປັງ ! ປັງ !"

– ໃນເມື່ອເປັນແນວນີ້ ຈຶ່ງເຮັດໃຫ້ກອງຫຼອນ ແນ່ໃຈຫຼາຍ

ຍິ່ງຂຶ້ນວ່າ ບຸກຄົນທັງສາມນັ້ນ ບໍ່ແມ່ນສະຫາຍ ແຕ່ມັນໄດ້ກາຍເປັນ ສັດຕູຢ່າງແນ່ນອນ ມັນບໍ່ແມ່ນສັດຕູທຳມະດາ ຍອນວ່າຮູ້ຈັກທິດທາງ ສຽງເວົ້າຂອງເຂົາ ພ້ອມດຽວກັນກໍຮູ້ສຶກແສບ ທີ່ບ່າໄຫຼ່ເບື້ອງຂວາ ເຂົາຖືກສັດຕູຍິງ ແຕ່ທອງກໍພະຍາຍາມທົນຕໍ່ຄວາມເຈັບປວດ ແມ ປາຍປືນໄປໃສ່ ບຸກຄົນທັງສາມໃນທັນທີ ພ້ອມກັບລັ່ນໄກປືນ ອີກຊຸດ ໜຶ່ງ....

"ປັງ ! ປັງ ! ປັງ !"

– ຈາກນັ້ນປືນກໍຫຼຸດອອກຈາກມືຂອງເຂົາ ທັງທີ່ໄດ້ກັດແຂ້ວ ໄວ້ດ້ວຍຄວາມອົດທົນຢ່າງທີ່ສຸດ ແລ້ວແຕ່ມັນກໍບໍ່ສາມາດ ກຳປືນໄວ້ ໃນມືໄດ້ ເຂົາຄ່ຽລົ້ມຕົວລົງໂດຍເອົາມືຊ້າຍບີບໄຫຼ່ເບື້ອງຂວາທີ່ຖືກ ກະສຸນຂອງສັດຕູ. ເພື່ອບໍ່ໃຫ້ເລືອດອອກມາຫຼາຍ ເຂົາ ພ້ອມຈະ ໝົດຄວາມຮູ້ສຶກຢູ່ແລ້ວ ກໍພໍດີສະຫາຍ ກອງຫຼອນມາເຖິງ ແຕ່ບໍ່ສາ ມາດຈະຈື່ສຽງໄດ້ໝົດທຸກຄົນ ເຖິງປານນັ້ນ ເຂົາກໍຍັງສາມາດຫຼຸດ ຄວາມເວົ້າອອກມາຢ່າງອາດຫານວ່າ:

"ສະຫາຍຈົ່ງດັບສູນສັດຕູ... ມັນຍັງເຫຼືອຕາຍຜູ້ໜຶ່ງ ປະ ເຮົາໄວ້ ເຮົາບໍ່ເຈັບຫຼາຍດອກ." ສຸດສຽງເວົ້າ ປະກົດວ່າທອງ ກໍໝົດຄວາມຮູ້ສຶກໄປໃນທັນທີ... ທອງມີຄວາມຮູ້ສຶກຕົວຂຶ້ນມາ.... ແຕ່ບໍ່ແມ່ນເຂົານອນຢູ່ແຄມປ່າມ້າກ້ຽງ ສະຖານທີ່ນັ້ນ ແມ່ນໂຮງໝໍສີ ສະຫວາງວົງໂສກປ່າຫຼວງ ເຂົາໄດ້ພົ້ນເຂດອັນຕະລາຍແລ້ວຕັ້ງແຕ່ ຕອນເຊົ້າມືດຂອງວັນນັ້ນ ແຕ່ນາຍໝໍໄດ້ເຮັດໃຫ້ເຂົານອນຫຼັບເພື່ອ

ໃຫ້ມີການພັກຜ່ອນພຽງພໍ ແລະ ມາຮູ້ສຶກຕົວໃນຕອນບ່າຍວັນ ດຽວກັນ ສາຍຕາຂອງທອງກວາດໄປເບິ່ງບໍລິເວນຫ້ອງຮັກສາຕົວ ເຊິ່ງເຕັມໄປດ້ວຍຜູ້ຄົນອັນເປັນພໍ່ແມ່ອ້າຍເອື້ອຍນ້ອງຕະຫຼອດເຖິງບັນດາສະຫາຍກອງຫຼອນປະຈຳບ້ານນ້ຳກຽງ ພ້ອມດ້ວຍຜູ້ຕາງຫນ້າຄະນະອຳນາດການປົກຄອງເມືອງນາຊາຍທອງ ທີ່ໄດ້ພ້ອມກັນມາ ຢ້ຽມຢາມຖາມຂ່າວ ເພື່ອໃຫ້ຄວາມອົບອຸ່ນແກ່ເຂົາ ອັນເປັນສິ່ງປະທັບໃຈເທື່ອທຳອິດໃນຊີວິດ ຍາກທີ່ຈະລືມໄປໄດ້ຕະຫຼອດຈົນຊົ່ວຊີວິດນີ້.

- ຊາຍຫນຸ່ມຫຼັບຕາລົງດ້ວຍຄວາມເປັນສຸກໃຈຢ່າງຍິ່ງເມື່ອໄດ້ຍິນສຽງສັນລະເສີນທີ່ກ່າວອອກມາຈາກປາກຂອງຜູ້ຕາງຫນ້າຄະນະອຳນາດການປົກຄອງມີຕອນຫນຶ່ງເຂົາໄດ້ຍິນວ່າ:

"ທ່ານຜູ້ດຽວ ສາມາດດັບສູນລູກແຫຼງຕີນມື ຂອງພວກປະຕິການໄດ້ເຖິງສາມຄົນ ! ຈາກນ້ຳໃຈເສັຽສະຫຼະດ້ວຍຄວາມ ກ້າຫານ ແລະມີຄວາມປະເສີດໃນຄັ້ງນີ້ທາງພັກປະຊາຊົນປະຕິວັດລາວ ແລະລັດຖະບານ ຈະໄດ້ຈື່ຈຳຄຸນງາມຄວາມດີທີ່ທ່ານສ້າງໄວ້ໃຫ້ແກ່ປະເທດຊາດຢ່າງບໍ່ຮູ້ລືມພັກແລະລັດຖະບານຈະເບິ່ງແຍງທ່ານແລະຄອບຄົວຂອງທ່ານເປັນຢ່າງດີ...ຈະບໍ່ຖິ້ມທ່ານເປັນອັນຂາດ!".

- ບັດນີ້ຊາຍຫນຸ່ມໄດ້ຕັດສິນໃຈຢ່າງເດັດຂາດ ພ້ອມທັງຍັງໄດ້ແນມເຫັນອະນາຄົດອັນສົດໃສຂອງຕົນແລ້ວ ມີຄວາມເຊື່ອຫມັ້ນຕໍ່ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວແລະລັດຖະບານ ເຊິ່ງເປັນການຍາກທີ່ຈະມີອຳນາດປະຕິການໃດໆ ມາ

ດີງແຍກ ເຮັດໃຫ້ຈິດໃຈອັນຫນຽວແຫນ້ນຂອງເຂົາສັບປ່ຽນໄປເປັນອື່ນໄດ.




ແຄມນ້ຳຂອງວຽງຈັນປີນີ້ ຂຽວງາມໄປດ້ວຍຜັກນາງຊະນິດ ຕ່າງກັບຫຼາຍໆປີທີ່ຜ່ານມາ. ຢືນຢູ່ແຄມທາຄຸ້ມຂຽແລວ ຫຼຽວລົງໄປທາງໃຕ້ບ່ອນນ້ຳຂອງຄົດໂຄ້ງ ຈະເຫັນຫນານຜັກເປັນຖັນແຖວຂຽວຊຸ່ມຫຸ່ມທ່າມກາງຄວາມສະລົວຂອງຄ້ອນຫມອກຍາມເຊົ້າ, ຖັນແຖວຂອງຫນານຜັກຕິດຕໍ່ເນື່ອງກັນຈົນສຸດສາຍຕາ ຄ້າຍກັບວ່າແຄມນ້ຳຂອງມີຂົນນຸ່ມໄດ້ຂຶ້ນລຽງຕະຫຼອດຄວາມຍາວຂອງແມ່ນ້ຳຂອງ.

ຍ່ານຄຸ້ມຂຽຢູ່ ກໍຄືຍ່ານອື່ນໆ ມີຫນານຜັກເປັນຖັນແຖວລາມລົງໄປຮອດລະດັບນ້ຳ ປະຊາຊົນຄຸ້ມນີ້ລົງມືເຮັດສວນຜັກກັນແຕ່ກາງເດືອນສິບສອງ. ທຳອິດກໍຂຸດຫນານຜັກເປັນແຖວລົງໄປຕາມຕະລິ່ງໄດ້ພຽງຫ້າຫົກຫນານ, ເມື່ອລະດັບນ້ຳແຫ້ງລົງໄປເລື້ອຍໆກໍມີຫນານຜັກຕິດຕາມໄປນຳ ຈົນຈຳນວນຫນານເພີ່ມຂຶ້ນຮອດສິບເອັດສິບສອງ

ອັນນີ້ໄລ່ຈຳນວນຈາກເທິງລົງລຸ່ມຫັ້ນນັ້ນ. ເບິ່ງອີກຢ່າງໜຶ່ງ ຄ້າຍໆ ກັບວ່າ ຫນານຜັກໄດ້ໄລ່ລະດັບນ້ຳໃຫ້ຕ່ຳລົງໄປເລື້ອຍໆ. ຫຼຽວເບິ່ງແຕ່ໄກກໍຈະເຫັນສີຂຽວຂອງຜັກລາມຈາກຕາຝັ່ງໄລ່ແຫຍສີຟ້າ ຂອງນ້ຳໃຫ້ຕ່ຳລົງໄປ ຕ່ຳລົງໄປ.

ຂະນະທີ່ຜັກປົ່ງໃບຂຽວງາມ ລະດັບນ້ຳລົດລົງໄປເລື້ອຍ ໆ ນັ້ນ ສິ່ງທີ່ບໍ່ຈະເລີນຕາ ກໍປະກົດໃຫ້ເຫັນໄປພ້ອມ ໆ ກັນ, ນັ້ນຄື ເຟືອງແກ້ວແຕກພົ້ນມາຈາກໜ້າດິນ ຫຼາຍໆເຟືອງແຫຼມຄົມເປັນອັນຕະລາຍ, ກະປ໋ອງເປົ່າຈຳນວນຫຼວງຫຼາຍ ບາງປ໋ອງສົ່ງກິ່ນເໝົ່າເໝັນ, ຖົງປະລາສະຕິກເດັ່ຍລະດາດໄປທົ່ວ ແລະ ສິ່ງເສດເຫຼືອສາລະພັດຢ່າງ.

ຫຼຽວເຫັນແກ້ວແຕກເປັນແງ່ມແຫຼມຄົມແລ້ວ ຂ້ອຍຮູ້ສຶກ ດຽມຄິງຈົນຂົນຫນາວລຸກ, ມັນຊູຊັນພົ້ນອອກມາຈາກໜ້າດິນ, ບາງເຟືອງສະທ້ອນກັບແສງແດດເປັນແມບມາບ ມີທັງເຟືອງຂອງ ຂວດເຫຼົ້າເບັຽ ໂຊດາ ວິສະກີ ແລະ ອື່ນໆຊຶ່ງເປັນຂອງເສດເຫຼືອຈາກສິ່ງຟຸມເຟືອຍທີ່ບັນດາຊົນຊັ້ນນາຍທຶນ ແລະ ຜູ້ຮັ່ງມີທັງຫຼາຍຈັບຈ່າຍຊື້ຫາມາກິນມາດື່ມຢ່າງບໍ່ອັ້ນສະໄໝລະບອບປົກຄອງເກົ່າ.

ຂ້ອຍເສັຽເວລາບໍ່ໜ້ອຍເລີຍ ໃນການເກັບເສດແກ້ວ ເຫຼົ່ານີ້ໄປໂຮມກັນແລ້ວຈັດການຝັງເລິກໆ ເພື່ອບໍ່ໃຫ້ ເປັນອັນຕະລາຍ ຕໍ່ໄປ. ທຸກແລງທີ່ລົງທືດຜັກຂ້ອຍມັກເລາະລຽບຕາມແຄມຫນານຜັກຕາມບ່ອນຍາງລົງຕັກນ້ຳ ເພື່ອຫາເກັບເຟືອງແກ້ວ ກ່ອນທີ່ລົງມືທືດຜັກ,

ເບິ່ງຄືວ່າແຮ່ງເກັບເທົ່າໃດກໍແຮ່ງພົບເຫັນຫຼາຽຂຶ້ນຊູກໄຊ້ ແລະ ຄື ຈະບໍ່ຫມົດເປັນຈັກເທື່ອ, ບາງມື້ຂຽມົວເກັບເສດແກວ ເກືອບຊິຄໍ່າ ແລະ ເຫຼືອເວລາພຽງເລັກນຽສໍາລັບຫົດຜັກ, ຂະນະທີ່ເກັບ ເສດແກວໄປ ກໍຮູ້ສຶກເຄືອງໆບໍ່ດີໃຈ ເພາະຜູ້ອື່ນນັ້ນ ບໍ່ມີໃຜເອົາຫົວຊາເລີຽໃນການຊອກເກັບເອົາເສດແກວອອກຈາກທາງຍາງລົງຕັກນ້ຳ ຕົວຢ່າງກໍຄື ທາວກອງ ເພື່ອນຮຸ່ນດຽວກັນກັບຂຽຊຶ່ງເຮັດສວນຜັກຢູ່ຖັດໄປ. ຫມໍມັກລົງທ່ານ້ຳແຕ່ຍາມແດດຍັງກາ ແລວກໍນັ່ງເບິ່ງ ຜູ້ສາວອາບນ້ຳ ທາງປາກກໍຜິວຫວອດໆ ຕະຫຼອດຮອດຊິຄໍ່າ. ແມ່ນຢູ່ວ່າການຫົດຜັກຕອນແດດຍັງກາຢູ່ນັ້ນເປັນການບໍ່ເຫມາະສົມ, ແຕ່ເມື່ອແດດອ່ອນແລວຄວນລົງມືໂລດ; ແຕ່ນີ້ຫມໍນັ່ງ ຈົນເທົ່າຕາເວັນຕົກ ແລະ ມືດພໍຊຸ້ມຊຸມແລວຈຶ່ງຈັບເອົາຄຸໄປຕັກນ້ຳ. ເບິ່ງຄືວ່າການລົງຫົດຜັກເປັນເລື່ອງອັນດັບສອງ ຮອງຈາກການເບິ່ງຜູ້ສາວ ອາບນ້ຳ. ຫມູ່ເພື່ອນຫຼາຽຄົນເວົ້າເຍີ້ຽວ່າ ຖາບໍ່ມີຜູ້ສາວລົງອາບນ້ຳຫມໍກອງກໍຄົງບໍ່ລົງມືເຮັດສວນຜັກນຳບານນຳເມືອງເພິ່ນດອກ. ຫມໍເປັນຄົນເຈົ້າຊູ້, ທາທາງຊຸມນາງ ຜົມທານ້ຳມັນເຫຼື້ອມຕະຫຼອດເວລາ, ຂະຫນາດວ່າລົງມາຫົດຜັກກໍຍັງມີຫວີຕິດຖົງມານຳ ແຖມຍັງໃສ່ແວ່ນຕາດຳ ເຫັນແລວມັນເຂີນໆ ວາດໃດວາດຫນຶ່ງ. ມີຫຼາຽຄົນລັກຫົວອີກໆ ແລະ ເຂົ້າໃຈດີວ່າທີ່ຫມໍໃສ່ແວ່ນຕາດຳມາສວນຜັກນັ້ນກໍເພື່ອລັກເບິ່ງຜູ້ສາວອາບນ້ຳ, ຄືຫມໍຈະນັ່ງປິ່ນຫນ້າໄປທາງຫນຶ່ງ ສ່ວນຕານັ້ນເຫຼືອດເບິ່ງຜູ້ສາວທີ່ກຳລັງລຽນ້ຳຢູ່ອີກທາງຫນຶ່ງ.

ບໍ່ແມ່ນເວົ້າຂີ້ຊຽດອກ ຜັກຂອງຫມໍກອງນັ້ນເຫຼືອງຫຼ່າ ແລະ ຕົ້ນລີບ ສູ້ຜັກຂ້ອຍບໍ່ໄດ້ ຊຶ່ງມີແຕ່ຕົ້ນໃຫຍ່ໆ ຂຽວງາມຈົນບໍ່ຢາກເດັດ ມາກິນ ເພາະເສັຽດາຍເອົາໄວແຍງຍາມເຊົ້າຍາມແລງ,ຫມໍກອງ ບໍ່ຄ່ອຍເອົາໃຈໃສ່ບົວລະບັດຫນານຜັກ, ບໍ່ເອົາຝຸ່ນໃສ່ປ່ອຍໃຫ້ຫຍ້າຂຶ້ນ ຈົນດົກຫນາ.

ຂ້ອຍເຄີຍຖາມຢອກຫມໍວ່າ: (ແມ່ນສວນຜັກຫຼືສວນຫຍ້າເວີຍ ກອງ ?).

ຫມໍບໍ່ຕອບ ພຽງແຕ່ຫົວຣີ້ຣີຢູ່ໃນຮູຄໍແລ້ວກໍແນມເບິ່ງ ຜູ້ສາວ ອາບນ້ຳຕໍ່ໄປ.

ຄວາມຈິງມັນກໍບໍ່ເຫມາະ ທີ່ຈະໄປຫຽວກ່ຽວກັບ ຫນານຜັກ ຂອງຫມໍ ແຕ່ວ່າມັນຢູ່ຖືກກັນ ເຫັນຕຳຕາທຸກມື້ ຈຶ່ງອົດປາກບໍ່ໄດ້. ເຖິງຢ່າງໃດກໍຕາມ ສິ່ງທີ່ຂ້ອຍເຄືອງໃຈບໍ່ເລີກບໍ່ແລ້ວກໍແມ່ນ ຫມໍບໍ່ ເອົາໃຈໃສ່ກັບເຟື້ອງແກວຊ່ວຍ. ນ້ຳແຫງລົງທຸກມື້ເສດແກ້ວກໍປະ ກົດໃຫ້ເຫັນເພີ່ມຂຶ້ນທຸກມື້, ຂ້ອຍຕອງເສັຽເວລາເກັບເສດແກວ ທຸກ ແລງກ່ອນທີ່ຈະໄດ້ຕັກນ້ຳຫົດຜັກ, ສ່ວນຫມໍກອງນັ້ນໃສ່ແວ່ນຕາດຳ, ນັ່ງພິວປາກຫວອດ ໆ, ເບິ່ງຊິ່ງບໍ່ຫ່ວງບໍ່ໃຍນຳໃຜ.

ເມື່ອສອງສາມມື້ທີ່ຜ່ານມາ ທາວແອ ອາຍຸ ໖ ປີ ລູກຊາຍ ເອື້ອຍຂອງຫມໍກໍຢຽບແກວ ຂະນະທີ່ລົງອາບນ້ຳຍິນສຽງຮ້ອງໃຫ້ຄັບ ທາດ້ວຍຄວາມເຈັບປວດ ເລືອດອອກບໍ່ຢຸດວາຍຈົນໄດ້ເອົາໄປໂຮງ ຫມໍ. ທາວແອ ບໍ່ແມ່ນລາຍທຳອິດທີ່ປະສົບເຄາະຮ້າຍ, ຍັງມີຜູ້ອື່ນ

ທັງເດັກ ແລະ ຜູ້ໃຫຽ່ເຄີຽຢຽບແກ້ວມາແລ້ວບໍ່ຕ່ຳກວ່າສີ່ຄົນ. ນັບແຕ່ເລີ່ມເຮັດສວນຜັກມາ, ຖ້າຂຽບໍ່ເອົາໃຈໃສ່ເກັບເສດແກ້ວ ທຸກແລ້ວ ຜູ້ທີ່ປະສົບຄວາມເຈັບປວດກໍອາດຈະເພີ່ມຈຳນວນຂຶ້ນເປັນສິບກວ່າແລ້ວ.

ຂຽເອງກໍບໍ່ປາກບອກຫນໍ່ກອງໂດຽກົງດອກວ່າ ໃຫ້ຊ່ວຽກັນເກັບເຟືອງແກ້ວຕາມບ່ອນຍາງລົງຕັກນ້ຳ ແຕ່ກໍຊວນໂດຽທາງອອມນັ້ນຄື ເກັບເສດແກ້ວກອງໄວ້ແລ້ວ ກໍຈັດການຝັງໃຫ້ຫນໍ່ເຫັນ ໂດຽຄິດວ່າ ເມື່ອຫນໍ່ເຫັນດັ່ງນັ້ນແລ້ວ ຫນໍ່ຈະຄິດສະເດືອກໃຈຢາກເຮັດຊ່ວຽເອງ ເພາະທາງຍາງລົງຕັກນ້ຳນີ້ເປັນຂອງທຸກຄົນ, ແຕ່ກໍບໍ່ເຫັນຫນໍ່ສະເດືອກຈັກເທື່ອ ຄົງມີແຕ່ນັ່ງເບິ່ງຜູ້ສາວອາບນ້ຳຕໍ່ໄປຢ່າງຕັ້ງອົກຕັ້ງໃຈ. ເມື່ອເປັນແນວນັ້ນ ຂຽຈຶ່ງຖາມຂຶ້ນວ່າ:

"ແກ້ວບໍ່ປີກຕີນໂຕຫວະກອງ?"

"ບໍ່ ! ເຮົາຍົກສູງສະຕິລະວັງຕົວຢ່າງລະມັດລະວັງເລີຽບໍ່ຢຽບຈັກເທື່ອ" ຫນໍ່ຕອບ.

"ດີ ! ໂຕບໍ່ຢ້ານຜູ້ອື່ນຢຽບແດ່ຫວະ?"

"ຜູ້ໃດບໍ່ລະວັງກໍໃຫ້ມັນຢຽບໄປ, ຊ່າງຫົວມັນ!"

"ແມ່ນຄວາມໂຕໃດນີ້, ແຕ່ວ່າເຮົາເຢັນຫ່ວງເດັກນຽເຫັນເຂົາລົງອາບນ້ຳເປັນຫມູ່ສີ່ຫມູ່ຫ້າ ຢ້ານເຂົາຈະເຈັບເຂົາປວດ ເພາະເຂົາເບິ່ງບໍ່ເຫັນອັນຕະລາຽຄືຜູ້ໃຫຽ່ຄືດັ່ງທາວແອຫຼານໂຕຫັ້ນແລ້ວ."

ຫນໍ່ບໍ່ປາກ, ມີແຕ່ນັ່ງໃສ່ແວ່ນຕາດຳ ເບິ່ງຜູ້ສາວອາບນ້ຳ.

ຄວາມເວົ້າຂອງຂຽດຄົງແທງໃຈດຳໜໍ່ແຮງສົມຄວນ.

ມື້ນີ້ ຕາເວັນຄ່ຽລົງແລງແລ້ວ ແຕ່ແສງແດດຍັງຮ້ອນແຮງພໍທີ່ໜໍ່ກອງຈະໃຊ້ເປັນຂໍ້ອ້າງໃສ່ແວ່ນຕາດຳໄດ້ຢູ່. ຂຽດນັ້ນ ຫຼົກຫຍາອອກຈາກໜານຜັກໄດ້ເຄິ່ງໜານ ໃນທີ່ສຸດໜໍ່ກອງກໍປະກົດຕົວ ທີ່ແຄມຝັ່ງ ແລ້ວຍ່າງລົງທ່ານ້ຳດ້ວຍທ່າທາງສະຫງ່າແກມອວດອົ່ງ. ສ່ວນຜູ້ສາວກໍເລີ້ມລົງອາບນ້ຳ, ບາງພວກກໍຫົດຜັກດ້ວຍຄວາມເອົາໃຈໃສ່. ໜໍ່ກອງເລາະລຽບເບິ່ງໜານຜັກຂອງຜູ້ນັ້ນຜູ້ນີ້ ຄືຈິ່ງວ່າເປັນເຈົ້າທີ່ດິນ ທີ່ກຳລັງສຳຫຼວດພືນລະປູກອັນເປັນໝາກຜົນຂອງຜູ້ອອກແຮງງານທີ່ມາເຊົ່າກິນຂອງໜໍ່. ຄາວໜຶ່ງກໍມີສຽງເອີ້ນ ຂຶ້ນມາແຕ່ແຄມນ້ຳ ເປັນສຽງຂອງຍິງສາວທີ່ກຳລັງອາບນ້ຳຢູ່.

"ອ້າຍກອງ ມາງົມສະບູຊ່ວຍນ້ອງແດ່ ມັນຫຼຸດມືລົງນ້ຳແລ້ວຫາບໍ່ເຫັນ".

ໜໍ່ກອງຮີບລົງໄປຫາຍິງສາວຢ່າງໄວວາ ປານວ່າຊິໄປງົມເອົາເພັດນິນຈິນດາອັນປະເສີດ ຈັດການຖາຍເຄື່ອງ ແລ້ວກໍລຸຍລົງນ້ຳ.ໜໍ່ງົມໄປງົມມາຫາສະບູທົ່ວບໍລິເວນທີ່ຍິງສາວຜູ້ເປັນເຈົ້າຂອງສະບູອາບນ້ຳເປັນເວລາດົນສົມຄວນ ແຕ່ກໍໄຮ້ຜົນ, ໜໍ່ຂະຫຍາຍລົງກວ້າງອອກໄປເລື້ອຍໆຂຶ້ນທາງເໜືອ ລອງລົງທາງໃຕ້ ອອກທາງວັງ ໃນທີ່ສຸດໜໍ່ຢຸດຢູ່ກັບທີ່ ເອົາມືເບື້ອງໜຶ່ງຊູຂຶ້ນພົ້ນໜ້ານ້ຳໃນກຳມືມີສະບູສີຂາວ ຍິງສາວສະແດງຄວາມດີໃຈຢ່າງອອກໜ້າ.

"ຂອບໃຈອ້າຍກອງ ນ້ອງດີໃຈອີ່ຫຼີ".

ໜໍ່ກອງບໍ່ມີສີໜ້າວ່າພາກພູມໃຈ ຫາກແຕ່ຄື້ວຫຼຽວ. ຕໍ່ມາ ໜໍ່ກໍ່ຈັບເຟື້ອງແກ້ວຂຶ້ນ.

"ຊູຣເຈັບຕີນ ! ຢຽບແກ້ວພໍດີພໍສະບູ". ໜໍ່ວ່າແລ້ວກໍ່ຂື້ນຈາກໜານນ້ຳໄປນັ່ງຂອນໄມ້ ກົ້ມເບິ່ງຕີນທາງປາກກໍ່ຈົ່ມວ່າປວດ ໆ ຍິງສາວສອງສາມຄົນ ທີ່ກຳລັງອາບນ້ຳຫຸ້ມມາເບິ່ງ ແລະ ສະແດງຄວາມເຫັນໃຈທັງເວົ້າວ່າ:

"ຖ້າອ້າຍກອງບໍ່ຢຽບແລະບໍ່ເອົາເຟື້ອງແກ້ວນັ້ນຂຶ້ນມາ ບາງທີຊິແມ່ນພວກນ້ອງເອງ ປະສົບເຄາະຮ້າຍ ດີແລ້ວທີ່ອ້າຍຊ່ວຍປ້ອງກັນໄວ້ບໍ່ໃຫ້ຜູ້ອື່ນໄດ້ເຈັບປວດ. ຂໍໃຫ້ອ້າຍກອງເຊົາເຈັບໄວໆ".

ໜໍ່ກອງ ຫົວຮີຮີ ດ້ວຍຄວາມເພິ່ງພໍໃຈ ເຖິງຈະເຈັບກໍ່ຢ່າເພາະມີຜູ້ສາວໃຫ້ກຳລັງໃຈ.

ຕາເວັນເກືອບຕົກດິນແລ້ວ, ຜູ້ສາວເລີ້ມຂຶ້ນຈາກທ່າຫຼັງຈາກທີ່ອາບນ້ຳຊຳລະຮ່າງກາຍແລ້ວ. ຂຽວເງີຍໜ້າ ຈາກໜານຜັກອີກເທື່ອໜຶ່ງ ເບິ່ງໄປຍັງແຄມນ້ຳ ເຫັນໜໍ່ກອງນັ່ງຍ່ອງຢູ່ເຮັດວຸ້ນ ໆ ຢູ່ຄົນດຽວ, ໜໍ່ກຳລັງຊອກເກັບເຟື້ອງແກ້ວແຕກຢູ່ແຄມນ້ຳໄລແລ້ວມີປະມານຫ້າຫົກເຟື້ອງທີ່ໜໍ່ເອົາກອງໄວ້. ນັບແຕ່ນັ້ນໄປໜໍ່ຄົງຄິດໄດ້ແລ້ວວ່າ ການກຳຈັດສິ່ງເສດເຫຼືອເປັນເລື່ອງທີ່ ໜ້າສົນລະເສີນແລະເປັນຜົນດີຕໍ່ສ່ວນໂຮມ